ADB

# ຍຸດທະສາດ ແລະ ແຜນງານເພື່ອການຮ່ວມມືກັບປະເທດ

## ສາທາລະນະລັດປະຊາທິປະໄຕປະຊາຊົນລາວ 2008–2010







ສິງຫາ 2007

Asian Development Bank

ADB

# ຍຸດທະສາດ
# ແລະ
# ແຜນງານເພື່ອການຮ່ວມມືກັບປະເທດ

## ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
## 2008–2010

ສິງຫາ 2007

Asian Development Bank

”ເອກະສານນີ້ໄດ້ຖືກແປຈາກພາສາອັງກິດເພື່ອສາມາດເຂົ້າເຖິງຜູ້ອ່ານໃຫ້ໄດ້ຫລາຍກຸ່ມ. ໃນລະຫວ່າງທີ່ທະນາຄານພັດທະນາອາຊີ (ເອດີບີ) ພະຍາຍາມຢັ້ງຢືນຄວາມຖືກຕ້ອງ ຂອງການແປນີ້, ພາສາອັງກິດແມ່ນພາສາທີ່ໃຊ້ໃນການເຮັດວຽກທາງການຂອງ ເອດີບີ ແລະ ຕົ້ນສະບັບພາສາອັງກິດຂອງເອກະສານນີ້ແມ່ນເປັນສະບັບທີ່ມີເນື້ອໃນຕົວຈິງເທົ່າ ນັ້ນ (ນັ້ນຄື, ເປັນທາງການ ແລະ ເຊື່ອຖືໄດ້). ທຸກການ ອ້າງເຖິງແມ່ນຕ້ອງອີງໃສ່ຕົ້ນ ສະບັບພາສາອັງກິດຂອງເອກະສານນີ້.”

## ອັດຕາແລກປ່ຽນເງິນຕາ
(ໃນວັນທີ ກໍລະກົດ 2007)

| | | |
|---|---|---|
| ຫົວໜ່ວຍເງິນຕາ | – | ກີບ (KN) |
| $1.00 | = | ກີບ9,600 |
| ກີບ1.00 | = | $0.0000971 |

## ຄວາມໝາຍພາສາລາວຂອງອັກສອນຫຍໍ້ ໃນພາສາອັງກິດ

| | | |
|---|---|---|
| ADF | – | ກອງທຶນພັດທະນາອາຊີ |
| ADTA | – | ການຊ່ວຍເຫຼືອການໃຫ້ຄໍາແນະນໍາທາງດ້ານວິຊາການ |
| CAP | – | ແຜນການປະຕິບັດງານ |
| CPA | – | ການປະເມີນຜົນການດໍາເນີນງານຂອງປະເທດ |
| CSP | – | ຍຸດທະສາດ ແລະແຜນງານການຮ່ວມມືກັບປະເທດ |
| GDP | – | ຍອດຜົນຜະລິດຕະພັນພາຍໃນປະເທດ |
| GMS | – | ອານຸພາກພື້ນແມ່ນໍ້າຂອງ |
| Lao PDR | – | ສາທາລະນະລັດປະຊາທິປະໄຕປະຊາຊົນລາວ |
| LRM | – | ຫ້ອງການທະນາຄານພັດທະນາອາຊີປະຈໍາ ສປປ ລາວ |
| MDG | – | ເປົ້າໝາຍພັດທະນາສະຫະສະວັດ |
| NN3PC | – | ບໍລິສັດໄຟຟ້ານໍ້າງື່ມ 3 |
| NT2 | – | ໂຄງການພະລັງງານໄຟຟ້ານໍ້າຕົກ ນໍ້າເທີນ 2 |
| OCR | – | ແຫຼ່ງທຶນປົກກະຕິ(ທຶນດອກເບ້ຍປົກກະຕິ) |
| ODA | – | ການຊ່ວຍເຫຼືອການພັດທະນາຢ່າງເປັນທາງການ |
| PBA | – | ການຕອບສະໜອງທຶນຕາມຜົນການດໍາເນີນງານ |
| PPTA | – | ການຊ່ວຍເຫຼືອວິຊາການການກະກຽມໂຄງການ |
| PSD | – | ການພັດທະນາຂະແໜງເອກະຊົນ |
| PSOD | – | ກົມປະຕິບັດງານຂະແໜງເອກະຊົນ |
| RCSPU | – | ປັບປຸງໃຫ້ທັນສະພາບການ ແຜນງານ ແລະຍຸດທະສາດການຮ່ວມມືໃນພາກພື້ນ |
| SEDP6 | – | ແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 |
| SME | – | ວິສະຫະກິດຂະໜາດນ້ອຍ ແລະຂະໜາດກາງ |
| TA | – | ການຊ່ວຍເຫຼືອດ້ານວິຊາການ |

## ນ້ຳໜັກ ແລະມາດຕາວັດແທກ

| | | |
|---|---|---|
| GWh | – | ກິກກາວັດ ໂມງ |
| km | – | ກິໂລແມັດ |
| Kv | – | ກິໂລໂວັນ |
| m | – | ແມັດ |
| $m^3$ | – | ແມັດກ້ອນ |
| MW | – | ເມກາວັດ |

## ໝາຍເຫດ

(i) ປີງົບປະມານຂອງລັດທະບານ(FY) ແມ່ນສິ້ນສຸດໃນວັນທີ 30 ກັນຍາ

(ii) ໃນບົດລາຍງານນີ້, "$" ໝາຍເຖິງເງິນໂດລາສະຫະລັດ

| | |
|---|---|
| ຮອງປະທານ | C. Lawrence Greenwood, Jr., Operations Group 2 |
| ຫົວໜ້າກົມ | A. Thapan, Southeast Asia Department (SERD) |
| ຜູ້ຕາງໜ້າ | J. A. Nugent, Lao Resident Mission (LRM), SERD |
| ຫົວໜ້າທີມງານ | C.T. Hnanguie, Country Economist, LRM, SERD |
| ຊະມາຊິກທີມງານ | ADB Lao PDR Country Team |

# ສາລະບານ


ໜ້າທີ

I. ຄວາມສອດຄ່ອງ ຂອງແຜນດຳເນີນງານ ຕໍ່ກັບຍຸດທະສາດການຮ່ວມມືກັບປະເທດໃນປັດຈຸບັນ 1

II. ດັດສະນີແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະບໍ່ແມ່ນການກູ້ຢືມ 3

III. ສັງລວມການປ່ຽນແປງຕໍ່ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະບໍ່ແມ່ນການກູ້ຢືມ 5
- ກ. ການດັດສົມແຜນງານ ປີ 2007 5
- ຂ. ສັງລວມການປ່ຽນແປງຕໍ່ແຜນງານ 2008-2010 6

IV. ດັດສະນີຄວາມຕ້ອງການທຶນຮອນພາຍໃນຕາມແຜນ 6

V. ການຕິດຕາມໂດຍອີງໃສ່ຜົນຂອງການດຳເນີນງານພື້ນຖານ 7


ຕາຕະລາງ


1. ດັດສະນີແຜນການປະເພດຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2008-2010 9
2. ດັດສະນີແຜນການປະເພດ ແລະການບໍລິການ ຂອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2008-2010 12
3. ສັງລວມຂໍ້ມູນປະເພດ ແລະການບໍລິການ ຂອງການຊ່ວຍທີ່ເປັນເງິນກູ້/ການຍຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2008 16
4. ແຜນການປະເພດການຊ່ວຍເຫຼືອຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2007 21
5. ແຜນການປະເພດການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ, 2007 22

# I. ຄວາມສອດຄ່ອງ ຂອງແຜນດຳເນີນງານຕໍ່ກັບຍຸດທະສາດການຮ່ວມມືກັບປະເທດໃນປັດຈຸບັນ

1. ການເຕີບໂຕຂອງເສດຖະກິດແບບຍືນຍົງ,ການພັດທະນາສັງຄົງແລະການລຶບລ້າງຄວາມທຸກຍາກຢ່າງຮີບດ່ວນແມ່ນເປົ້າໝາຍຍຸດທະສາດຂອງຍຸດທະສາດການລຶບລ້າງຄວາມທຸກຍາກຂອງລັດຖະບານສາທາລະນະລັດປະຊາທິປະໄຕປະຊາຊົນລາວ ເຊິ່ງໄດ້ລະບຸໄວ້ໃນແຜນພັດທະນາເສດຖະກິດສັງຄົມຄັ້ງທີ 6, 006-2010 (SEDP6). SEDP6ໄດ້ວາງໂຄງຮ່າງການພັດທະນາທີ່ແທດເໝາະ ແລະ ສອດຄ່ອງໂດຍສຸມ ໃສ່ ແລະ ໃຫ້ບູລິມະສິດແກ່ຂະແໜງກະສິກຳ, ສາທາ(ລະບົບນ້ຳປະປາ), ຂະແໜງສຶກສາ ແລະຂະແໜງພື້ນຖານໂຄງລ່າງແລະຜັກດັນການປະຕິຮູບໃນຂົງເຂດທີ່ສຳຄັນ(ເຊັ່ນ: ການພັດທະນາຄວາມສາມາດ, ການບໍລິຫານຄຸ້ມຄອງ[ລວມໄປເຖິງການຄຸ້ມຄອງການເງິນພາກລັດ], ການພັດທະນາຂະແໜງເອກະຊົນ, ການເຊື່ອມ ໂຍງໃນພາກພື້ນ, ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ).

2. ໃນປັດຈຸບັນ ປປ ລາວແມ່ນຕິດພັນກັບໄລຍະການຂະຫຍາຍໂຕຂອງເສດຖະກິດຢ່າງແຂງແຮງ. ການຂະຫຍາຍໂຕແບບຕໍ່ເນື່ອງຂອງຂະແໜງຂຸດຄົ້ນບໍ່ແຮ່ແລະພະລັງງານສົ່ງຜົນໃຫ້ຜະລິດຕະພັນພາຍໃນຂະຫຍາຍໂຕ 7.3% ໃນປີ 2006, ຄາດວ່າການຂະຫຍາຍໂຕຂອງຜະລິດຕະພັນພາຍໃນ (GDP) ຕໍ່ປີຈະສືບຕໍ່ຂະຫຍາຍໂຕທີ່ 7.0% ຈົນເຖິງປີ 2010; ອັດຕາເງິນເຟີ້ ໄດ້ສືບຕໍ່ລົດລົງຢ່າງຕໍ່ເນື່ອງຈົນຮອດ 6.8% ໃນປີ 2006 ແລະ 5.3%ໃນເຄິ່ງປີທຳອິດຂອງປີງົບປະມານ FY 2006-2007 (ເດືອນຕຸລາຫາເດືອນມີນາ). ຄ່າເງິນກີບມີຍັງຄົງຮັກສາຄວາມມີສະຖຽນລະພາບຕະຫຼອດປີ 2006 ຫຼັງຈາກໄດ້ແຂງຄ່າຂຶ້ນໃນປີ 2005 ເມື່ອທຽບໃສ່ສະກຸນເງິນບາດແລະໂດລາສະຫະລັດ. ການຂະຫຍາຍໂຕຢ່າງແຂງແຮງຂອງພາກການສົ່ງອອກໄດ້ຊ່ວຍໃຫ້ມີ ການກະຕຸ້ນການຂະຫຍາຍໂຕຂອງການລົງທຶນຕ່າງປະເທດໃນພາກການນຳເຂົ້າ, ສົ່ງຜົນໃຫ້ການ ຂາດດຸນບັນຊີເດີນສະພັດລົດລົງຈາກປະມານ 20% ໃນປີ 2005 ຫາ 13% ໃນປີ 2006, ພ້ອມກັນນີ້ສະຖານະພາບໜີ້ແມ່ນດີຂຶ້ນ, ແລະຄາດການວ່າອັດຕາສ່ວນການຊຳລະໜີ້ຕໍ່ ລາຍຮັບແມ່ນຫຼຸດລົງຈາກປະມານ 20% ໃນປີ 2005 ຫາ 12% ໃນປີ 2006[1]. ສປປ ລາວ ຢູ່ໃນເປົ້າໝາຍແລະສືບຕໍ່ຕັ້ງໜ້າປະຕິບັດແຜນການເພື່ອບັນລຸເປົ້າໝາຍພັດທະນາສະຫັດສະວັດທີ່ເປັນລາຍຮັບ, ແຕ່ຍັງມີຄວາມລ້າຊ້າສຳລັບເປົ້າໝາຍສະຫັດສະວັດທີ່ບໍ່ແມ່ນລາຍຮັບ.

3. ແຜນງານ ແລະ ຍຸດທະສາດການຮ່ວມມືກັບປະເທດ 2007-2011 ຂອງທະນາຄານພັດທະນາອາຊີສຳລັບ ສປປ ລາວ (CSP)[2] ແມ່ນສອດຄ່ອງແລະເປັນໄປຕາມໂຄງຮ່າງການພັດທະ

---

[1] ທະນາຄານໂລກ. 2007.ການຕິດຕາມເສດຖະກິດຂອງ ສປປ ລາວ: ທະນາຄານໂລກສຳນັກງານທີ່ວຽງຈັນ(ເດືອນ ກໍລະກົດ); ທະນາຄານແຫ່ງ ສປປ ລາວ. 2007. ປັບທັນເສດຖະກິດກັບສະພາບປະຈຸບັນສຳລັບເຄິ່ງປີທຳອິດຂອງສົກປີງົບປະມານ FY2006/2007 ທີ່ວຽງຈັນ ເດືອນ ມິຖຸນາ; ທະນາຄານພັດທະນາອາຊີ. 2007. ລາຍງານການພັດທະນາອາຊີ, 2007. ນະຄອນຫຼວງມະນີລາ ເດືອນ ເມສາ.

[2] ທະນາຄານພັດທະນາອາຊີ. 2006. ຍຸດທະສາດແລະແຜນງານການຮ່ວມມືກັບປະເທດ (2007-2011). ສປປ ລາວ. ນະຄອນຫວງມະນີລາ(ຮັບຮອງໂດຍຄະນະປະທານທະນາຄານພັດທະນາອາຊີ ໃນເດືອນ ຕຸລາ)

ນາຂອງລັດຖະບານ, ແລະຜັກດັນການເຕີບໂຕຂອງເສດຖະກິດແບບຍືນຍົງເພື່ອຫຼຸດຜ່ອນຄວາມທຸກຍາກ, ສ້າງທ່າແຮງໃຫ້ແກ່ສັງຄົມໂດຍລວມ ແລະ ປັບປຸງການບໍລິຫານການປົກຄອງ. ແຜນງານແລະຍຸດທະສາດທີ່ກ່ຽວພັນແມ່ນໄດ້ເລືອກເຟັ້ນເນັ້ນໜັກແລະສຸມໃສ່ຈຸດສະເພາະ (I) ສ້າງຄວາມເຂັ້ມແຂງ ແລະ ເສີມຂະ ຫຍາຍຄູ່ຮ່ວມມືຍຸດທະສາດ (II) ນຳໃຊ້ເຄື່ອງມືທີ່ມີຄວາມ ສອດຄ່ອງແລະຕອບສະໜອງຢ່າງມີປະສິດ ທິພາບ, ແລະ (III) ເນັ້ນໜັກການຮ່ວມມືແລະການ ພັດທະນາຄວາມສາມາດ. ຈຸດສຳຄັນຂອງຍຸດທະສາດແມ່ນການຮ່ວມມືກັບຄູ່ພັດທະນາຫຼາຍຝ່າຍ ເພື່ອທີ່ຈະກ້າວໄປສູ່ການພັດທະນາຄວາມສາມາດດ້ານການປະສານງານແລະແຜນງານ ແລະ/ຫຼື ເນັ້ນໜັກແນວທາງທີ່ອີງໃສ່ຂະແໜງການເປັນຫຼັກ ຂອງຂະແໜງການຕົ້ນຕໍເຊິ່ງໄດ້ຖືກວາງໄວ້ ແລະ ສະໜັບສະໜູນໃນຖະແຫຼງການວຽງຈັນກ່ຽວກັບ ປະສິດທິພາບຂອງການຊ່ວຍເຫຼືອ[3] ແລະແຜນການຂອງປະເທດທີ່ກ່ຽວພັນກັນ(CAP)[4] ການປະຕິບັດງານຂອງແຜນງານຍຸດທະສາດ ຮ່ວມມືກັບ (CSP) ສປປລາວ ແມ່ນຕິດພັນກັບຄວາມພະຍາຍາມຂອງຄູ່ຮ່ວມພັດທະນາຫຼາຍຝ່າຍທີ່ຈະປັບປຸງຄຸນນະພາບຂອງການເຂົ້າເຖິງການສຶກສາຂັ້ນພື້ນຖານ ແລະ ການບໍລິການດ້ານສາທາລະນະ ສຸກ, ຊຸກຍູ້ການຫັນປ່ຽນການຜະລິດກະສິກຳ ແລະ ການສົ່ງເສີມການຜະລິດກະສິກຳເພື່ອເປັນ ສິນຄ້າ, ແລະ ການສ້າງກາລະໂອກາດ/ສິ່ງເອື້ອອຳນວຍໃຫ້ແກ່ການພັດທະນາຂະ ແໜງເອກະຊົນ .ການປະຕິຮູບການປົກຄອງແມ່ນໄດ້ຮັບການສະໜັບສະໜູນຈາກການລິເລີ້ມຂອງຄູ່ຮ່ວມພັດທະ

ນາຫຼາຍຝ່າຍ ເພື່ອທີ່ສ້າງຄວາມເຂັ້ມແຂງ/ປັບປຸງການຄຸ້ມຄອງການເງິນພາກລັດໂດຍຜ່ານແຜນງານການສ້າງຄວາມເຂັ້ມແຂງການຄຸ້ມຄອງລາຍຈ່າຍງົບປະມານພາກລັດ, ທັງນີ້ແມ່ນເພື່ອຮັກສາຄວາມຍືນຍົງຂອງງົບປະມານລັດ ແລະ ສ້າງຄວາມເຂັ້ມແຂງໃນການໃຊ້ຈ່າຍງົບປະມານລັດເພື່ອຮັບປະກັນການຫຼຸດຜ່ອນຄວາມທຸກຍາກ. ແຜນງານການຮ່ວມມືກັບ ສປປລາວ ຂອງທະນາຄານພັດທະນາອາຊີໄດ້ຖືກຈັດຕັ້ງອອກແບບເພື່ອສົມທົບກັບແຜນງານ ແລະ ຍຸດທະສາດຂອງອະນຸພາກພື້ນແມ່ນ້ຳຂອງ (GMS), ໂດຍສະເພາະແມ່ນການລິເລີ້ມທີ່ສຸມໃສ່ ການສ້າງການເຊື່ອມຕໍ່, ການສົ່ງເສີມການລົງທຶນຕ່າງປະເທດໃນໂຄງການຂະໜາດໃຫ່ຍ ແລະ ຄວາມສມາດໃນການບໍລິການພາກລັດໃນພາກພື້ນ.

4. ການຈັດວາງຍຸດທະສາດທີ່ໄກ້ຄຽງ, ສອດຄ່ອງແລະເອື້ອອຳນວຍກັນລະຫ່ວາງແຜນງານການພັດທະນາ ເສດຖະກິດສັງຄົມ 5 ປີຄັ້ງທີ 6 (SEDP6) ແລະຍຸດທະສາດແລະແຜນງານການຮ່ວມມືກັບປະເທດ (CSP), ທິດທາງແລະຍຸດທະສາດອັນຮີບດ່ວນເທົ່ານັ້ນຈະຍັງຄົງສອດຄ່ອງກັບສະພາບປະຈຸບັນແລະມີຜົນສັກສິດສຳລັບຄວາມຕ້ອງການຂອງການພັດທະນາ ແລະ ຂະບວນການ ການ ປະຕິຮູບສຳລັບ ສປປ ລາວ. ແຜນງານການດຳເນີນງານໃນປະເທດສະໜັບສະໜູນ

---

[3] ຖະແຫຼງການຮ່ວມສະບັບທ້ອງຖິ່ນ ຂອງຖະແຫຼງການຮ່ວມປາລີ ກ່ຽວກັບປະສິດທິພາບຂອງການຊ່ວຍເຫຼືອ, ເຊິ່ງລັດຖະບານ ສປປ ລາວ ແລະ 22 ຄູ່ຮ່ວມພັດທະນາໄດ້ຮັບຮອງເອົາທີ່ກອງປະຊຸມໂຕະມົນທີ່ຈັດຂຶ້ນທີ່ວຽງຈັນ ໃນເດືອນ ພະຈິກ 2006

[4] ລັດຖະບານ ແລະ ຄູ່ຮ່ວມພັດທະນາໄດ້ຮັບຮອງເອົາແຜນການດຳເນີນງານຂອງປະເທດ ໃນວັນທີ 31 ພຶດສະພາ 2007

ການປະຕິບັດງານຂອງ SEDP6 ແລະ CSP ໂດຍຜ່ານການຈັດສັນຂອງກອງທຶນພັດທະນາອາຊີຂອງທະນາຄານ ພັດທະນາອາຊີໂດຍອີງໃສ່ຜົນການດໍາເນີນງານ, ການຈັດສັນກອງທຶນພັດທະນາອາຊີພາກພື້ນ ແລະ ແຫຼ່ງທຶນປົກກະຕິ (OCR), ແລະ ການປະຕິບັດງານຂອງຂະແໜງການເອກະຊົນ. ນອກນັ້ນ, ແຜນງານການດໍາເນີນງານໃນປະເທດຈະໃຫ້ການຊ່ວຍເຫຼືອ: (I) ລະດົມການຮ່ວມມືພາກລັດ ແລະ ເອກະຊົນ, ການດໍາເນີນການຮ່ວມທຶນ, ກອງທຶນບໍລິຫານທະນາຄານພັດທະນາອາຊີ, ແລະການລິເລີ້ມພິເສດຂອງທະນາຄານພັດທະນາອາຊີໃນພາກພື້ນ ແລະ ກົມການພັດທະນາແບບຍືນຍົງ; ແລະ (II) ສົ່ງເສີມການນໍາໃຊ້ທີ່ຫຼາກຫຼາຍຂອງເຄື່ອງມືການເງິນແລະຂະຫຍາຍການຮ່ວມມືກັບບັນດາສະຖາ ບັນທະນາຄານພັດທະນາອາຊີແລະຄູ່ຮ່ວມພັດທະນາອື່ນໆຕໍ່ໄປ.

## II. ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະ ບໍ່ແມ່ນການກູ້ຢືມ

5. ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະ ບໍ່ແມ່ນການກູ້ຢືມພາກລັດ 2008-2010 ໄດ້ຖືກຮັບຮອງເອົາໂດຍທະນາຄານພັດທະນາອາຊີແລະລັດຖະບານ ສປປ ລາວ. ຈໍານວນເງິນປະມານ 20 ລ້ານໂດລາສະຫະລັດຈະຖືກນໍາໃຊ້ເຂົ້າໃນການຈັດຕັ້ງໂຄງການກູ້ຢືມ/ການຊ່ວຍເຫຼືອລ້າທີ່ສະໜັບສະໜູນໂດຍດັດສະນີກອງທຶນພັດທະນາອາຊີສໍາລັບປີ 2008-2010. ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າປະກອບດ້ວຍສີ່ໂຄງການລະດັບຊາດ ທີ່ສະໜັບສະໜູນໂດຍກອງທຶນພັດທະນາອາຊີ (ADF) ($60 ລ້ານ), ເກົ້າໂຄງການອະນຸພາກພື້ນແມ່ນໍ້າຂອງ ($172 ລ້ານ), ພ້ອມນັ້ນກໍ່ມີໂຄງການທີ່ໃຫ້ການສະໜັບສະໜູນໂດຍແຫຼ່ງທຶນປົກກະຕິ (OCR) ທຶນດອກເບ້ຍປົກກະຕິ ($47ລ້ານ). ການປຶກສາຫາລືແມ່ນກໍາລັງດໍາເນີນໂດຍໄດ້ມີການຍົກບັນຫານການທີ່ເປັນທ່າແຮງໃນການສະໜັບສະໜູນຂະແໜງເອກະຊົນຫຼືການຈັດການການຮ່ວມມືພາກລັດເອກະຊົນໃນການຈັດຕັ້ງປະຕິບັດບັນດາໂຄງການພະລັງງານອະນຸພາກພື້ນແມ່ນໍ້າຂອງ.

6 ຫຼັງຈາກມີການນໍາໃຊ້ຮູບແບບການຈັດສັນທຶນໂດຍອີງໃສ່ຜົນຂອງການດໍາເນີນງານເປັນບ່ອນອີງ (PBA) ການຈັດສັນທຶນສະເພາະໃຫແກ່ປະເທດແມ່ນອີງໃສ່ຜົນຂອງການປະເມີນການດໍາເນີນງານຂອງປີ 2006. ເນື່ອງຈາກວ່າ ສປປ ລາວ ເປັນປະເທດທີ່ມີພາລະໜີ້ສູງ, ໃນປະຈຸບັນ ສປປ ລາວ ເປັນປະເທດທີ່ໄດ້ຮັບບຸລິມະສິດທີ່ໄດ້ຮັບການຊ່ວຍເຫຼືອລ້າ (Grant) 50% ທີ່ສະ**ໜັບ**ສະໜູນພາຍໃຕ້ແຜນງານແຫ່ງຊາດ. ການປັບປຸງການຈັດລໍາດັບໂດຍການອີງໃສ່ຜົນຂອງການດໍາເນີນງານເປັນຫຼັກໃນປີ 2006 ໄດ້ຊ່ວຍໃຫ້ ສປປ ລາວ ສາມາດໄດ້ຮັບທຶນເພີ້ມເຕີມຈໍານວນ $7 ລ້ານຈາກການຈັດສັນຂອງກອງທຶນພັດທະນາອາຊີສໍາລັບການປະຕິບັດງານປີ 2007 ແລະ 2008 ເຖິງແນວໃດກ ຕາມ, ດັດສະນີແຜນງານການສະໜອງເງິນກູ້ແຫ່ງຊາດແມ່ນໄດ້ຂື້ນໄວ້ຢູ່ໃນແຜນງານປີ 2008 (ຄາດວ່າຈະແມ່ນ $20 ລ້ານ ຫຼາຍກ່ວາ $27.1 ລ້ານ) ເພື່ອຮັບປະກັນການຫຼຸດລົງບໍ່ວ່າ ກໍລະນີໃດໆຂອງການ

ປ່ຽນແປງ ທີ່ອາດຈະເກີດຂື້ນຕໍ່ໂຄງຮ່າງການຊ່ວຍເຫຼືອລ້າທີ່ກຳລັງຍົກຂື້ນມາ ພິຈາລະນາ[5]. ແຜນງານທີ່ບໍ່ແມ່ນເງິນກູ້ສຳລັບປ 2009-2010 ຈະຖືກພິຈາລະນາໂດຍຜ່ານແນວທາງ ການປະເມີນຜົນຂອງການກດຳເນີນງານເປັນຫຼັກຂອງສົກປີ 2007.

7. ດັດສະນີລະດັບການສະໜອງທຶນ ຂອງກອງທຶນພັດທະນາອາຊີຖືກພິຈາລະນາບົນພື້ນຖານການປະເມີນຂອງຄວາມຍືນຍົງຂອງການບໍລິຫານໜີ້ສິນແລະຄວາມສາມາດກູ້ຢືມຂອງລັດຖະບານທີ່ຈັດຕັ້ງປະຕິບັດຮ່ວມກັນລະຫ່ວາງທະນາຄານໂລກ ແລະ ກອງທຶນການເງິນສາກົນ. ການຂະຫຍາຍໂຕຂອງເສດຖະກິດຢ່າງຕໍ່ເນື່ອງ ແລະ ການສ້າງຄວາມເຂັ້ມແຂງໃຫ້ລັດຖະບານໃນການບໍລິຫານອັດຕາສ່ວນລາຍຮັບຕໍ່ຍອດຜະລິດຕະພັນພາຍໃນຄາດວ່າຈະຊ່ວຍປັບປຸງໃຫ້ລັດຖະບານມີຄວາມສາມາດໃນວາລະການພັດທະນາໄລຍະກາງ. ເມື່ອພິຈາລະນາສະພາບໜີ້ໂດຍລວມຂອງປະເທດ, ລັດຖະບານຂອງ ສປປ ລາວໃຫ້ບຸລິມະສິດໃນການນຳໃຊ້ການຊ່ວຍເຫຼືອການພັດທະນາຢ່າງເປັນທາງການ (ODA) ຫຼາຍເທົ່າທີ່ຈຳເປັນ ແລະ ນຳໃຊ້ແຫຼ່ງທຶນປົກກະຕິ (ທຶນດອກເບ້ຍປົກກະຕິ) ເຂົ້າໃນໂຄງການເລືອກເຟັ້ນທີ່ຄາດວ່າຈະມີຜົນຕອບແທນທາງການເງິນສູງ.

8. ແຜນງານການຊ່ວຍເຫຼືອທາງດ້ານວິຊາການສຳລັບ ສປປ ລາວ ສຳລັບປີ 2008-2010 ຈຳນວນ $9 ລ້ານ, ສະເລ່ຍ $3 ລ້ານຕໍ່ປີ. ແຜນງານດັ່ງກ່າວໄດ້ໃຫ້ບຸລິມະສິດແກ່ການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ແລະ ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ (ADTA). ແຜນງານດັ່ງກ່າວຍັງປະກອບດ້ວຍ 6 ໂຄງການຊ່ວຍເຫຼືອດ້ານວິຊາການອະນຸພາກພື້ນແມ່ນ້ຳຂອງ (Primarily PPTA) ເປັນຈຳນວນເງິນທັງໝົດ $3.95ລ້ານ. ແຜນງານການຊ່ວຍເຫຼືອດ້ານວິຊາການຈະຖືກຂະຫຍາຍຫຼາຍເທົ່າທີ່ຈຳເປັນ ທັງນີ້ກໍ່ຂື້ນກັບການປະເມີນກອງທຶນທີ່ບໍລິຫານໂດຍທະນາຄານພັດທະນາອາຊີ, ແລະ ຜ່ານການຮ່ວມທຶນກັບບັນດາຄູ່ຮ່ວມຊ່ວຍເຫຼືອການພັດທະນາຢ່າງເປັນທາງການ (ODAP). ແຜນງານການເຮັດວຽກຂະແໜງການສະເພາະ ແລະ ເສດຖະກິດໄດ້ສ້າງພື້ນຖານໃຫ້ແກ່ການຊ່ວຍເຫຼືອຂອງທະນາຄານພັດທະນາອາຊີ ໃນການປະຕິຮູບນະໂຍບາຍ,

---

[5] ທະນາຄານພັດທະນາອາຊີກຳລັງຢູ່ໃນຂັ້ນຕອງການທົບທວນຄືນໂຄງຮ່າງຂອງການຊ່ວຍເຫຼືອລ້າພາຍໃຕ້ກອງທຶນພັດທະນາອາຊີ. ການຮັບຮອງເອົາໂຄງຮ່າງໃໝ່ເຊິ່ງພິຈະລະນາການໃຫ້ການຊ່ວຍເຫຼືອລ້າໂດຍອີງໃສ່ສະພາບໜີ້ຂອງປະເທດຍັງຄົງຕ້ອງໄດ້ສືບຕໍ່ຄ້າງ. ດັດສະນີແຜນງານການຊ່ວຍເຫຼືອລ້າແມ່ນອີງໃສໂຄງຮ່າງການໃຫ້ການຊ່ວຍເຫຼືອລ້າຂອງກອງທຶນພັດທະນາອາຊີທີ່ໄດ້ນຳສະເໜີໃນບົລລາຍງານການເຮັດວຽດທີ່ໄດ້ພິຈາລະນາໂດຍ ຄະນະປະທານຂອງທະນາຄານພັດທະນາອາຊີ ໃນວັນທີ 24 ກໍລະກົດ ປີ 2007. ແຜນງານການຊ່ວຍເຫຼືອລ້າອາດມີການປ່ຽນແປງເພື່ອໃຫ້ມັນມີຄວາມແທດເໝາະ. ການນຳສິ່ງໂຄງການການຊ່ວຍເຫຼືອລ້າເພື່ອໃຫ້ຄະນະປະທານພິຈາລະນາຕາມການຮັບຮອງຂອງແຜນງານທີ່ໄດ້ທົບທວນ ແມ່ນອີງໃສ່ເງື່ອນໄຂເປັນຫຼັກ. ເມື່ອຄະນະປະທານອະນຸມັດໂຄງການດັ່ງກ່າວ, ແຕ່ວ່າສັນຍາການຊ່ວຍເຫຼືອລ້າຈະຖືກເຊັນແມ່ນຫຼັງຈາກໂຄງການຊ່ວຍເຫຼືອລ້າສະບັບທົບທວນໄດ້ຖືກຮັບຮອງເອົາ.

ການສ້າງຄວາມສາມາດ, ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ.

## III. ສັງລວມການປ່ຽນແປງຕໍ່ແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າ ແລະບໍ່ແມ່ນການກູ້ຢືມ

### ກ. ການດັດສົມແຜນງານ ປີ 2007

9. ການປະຕິບັດກິດຈະກໍາຂອງແຜນງານການສະໜອງເງິນກູ້/ການຊ່ວຍເຫຼືອລ້າຂອງປີ 2007 ທີ່ວາງໄວ້ໃນຍຸດທະສາດແລະແຜນງານການຮ່ວມມືກັບປະເທດ (CSP) ແມ່ນໄດ້ຮັບໝາກຜົນທີ່ໜ້າພໍໃຈ. ບັນດາໂຄງການກູ້ຢືມ/ຊ່ວຍເຫຼືອລ້າທີ່ລັດຖະບານສະເໜີຂໍມາແມ່ນກໍາລັງຢູ່ໃນຂັ້ນຕອນການດໍາເນີນການຕາມແຜນ; ການຂາດແຄນທຶນສະໜັບສະໜູນແຜນງານກູ້ຢືມຂອງປີ2007ໄດ້ຂຶ້ນໄວ້ທີ່ກຸ່ມປະຕິບັດງານ 2 ແລະໄດ້ຈັດສັນໃໝ່ດັ່ງນີ້:(i) ແຜນງານການພັດທະນາລະບົບສາທາລະນະສຸກ $3 ລ້ານ (ເງິນຊ່ວຍເຫຼືອລ້າ GRANT), ແລະ (ii) ໂຄງການປັບປຸງຕາໜ່າງຂົນສົ່ງພາກເໜືອອະນຸພາກແມ່ນໍ້າຂອງ $27 ລ້ານ (ເງິນກູ້ກອງທຶນພັດທະນາອາຊີ ADF loan).

10. ການດັດສົມແຜນງານທີ່ບໍ່ແມ່ນເງິນກູ້ໄດ້ຈັດຕັ້ງປະຕິບັດໃນປີ2007.ອີງຕາມການສະເໜີຂອງລັດຖະບານ ສປປ ລາວ ການຊ່ວຍເຫຼືອວິຊາການການກະກຽມໂຄງການ (PPTA) ສໍາລັບການປະເມີນຜົນກະທົບສະສົມຂອງໂຄງການໄຟຟ້ານໍ້າຕົກນໍ້າງື່ມ3ໄດ້ຖືກເພີ້ມເຕີມເຂົ້າໃນແຜນງານ ($0.98 ລ້ານ). ການປະຕິບັດການທົບທວນການຊ່ວຍເຫຼືອດ້ານວິຊາການໃນຕົ້ນປີ 2007 ສົ່ງຜົນໃຫ້ຈໍານວນໂຄງການການຊ່ວຍເຫຼືອດ້ານວິຊາການຕາມແຜນຫຼຸດລົງຈາກ 6 ມາເປັນ 4 ໂຄງການ, ມີ 1 ໂຄງການຖືກຍົກເລີກ, ມີ 2 ໂຄງການຮວມຕົວເຂົ້າກັນ ແລະ ການຈັດສັນທຶນຫຼຸດລົງຈາກ $3.2 ລ້ານຫາ $3.06 ລ້ານດັ່ງນີ້ (i) ການສ້າງຄວາມສາມາດໃນການສະໜັບສະໜູນແຜນປະຕິບັດງານລວມສູນ ($0.6ລ້ານ) ຍົກເລີກ, (ii) ການສ້າງຄວາມກຽມພ້ອມຂອງແຜນງານຂະແໜງການສໍາລັບກະຊວງກະສິກໍາ ແລະ ປ່າໄມ້ ($.07 ລ້ານ), ແລະ ການສ້າງຄວາມສາມາດສະໜັບສະໜູນນະໂຍບາຍສໍາລັບອີງການບໍລິຫານອ່າງເກັບນໍ້າ ແລະ ແຫຼ່ງນໍ້າ ($0.5 ລ້ານ) ຮວມຕົວເຂົ້າກັນ, ພິຈາລະນາຈັດສັນທຶນໃໝ່ ແລະ ປ່ຽນຊື່ໂຄງການມາເປັນໂຄງການສ້າງຄວາມສາມາດ ແລະ ສະໜັບສະໜູນນະໂຍບາຍສໍາລັບກະສິກໍາ ແລະ ແຫຼ່ງນໍ້າ($0.85ລ້ານ); (iii) ການຈັດສັນທຶນສໍາລັບການຊ່ວຍເຫຼືອດ້ານວິຊາການສໍາລັບການປັບປຸງລະບົບຄຸ້ມຄອງການເງິນຖືກ ຕັດລົງຈາກ $1.0 ລ້ານຫາ $0.85ລ້ານ;ແລະ (iv) ການສ້າງຄວາມສາມາດໃຫ້ແກ່ການພັດ ທະນາວິສາຫະກິດຂະໜາດກາງ

ແລະ ຂະໜາດນ້ອຍ ($0.55 ລ້ານ) ການຈັດສັນທຶນສຳລັບການຊ່ວຍເຫຼືອດ້ານວິຊາການໄດ້ເພີ່ມຂຶ້ນຈາກ $0.4 ລ້ານ ເປັນ $0.55 ລ້ານ).

## ຂ. ສັງລວມການປ່ຽນແປງຕໍ່ແຜນງານ 2008-2010

11. ແຜນການສຳລັບປີ 2008-2009 ບໍ່ມີການປ່ຽນແປງຫຍັງຫຼາຍຈາກຍຸດທະສາດ ແລະແຜນງານການຮ່ວມມືກັບປະເທດ, ການດັດສົມຖືກຈັດຕັ້ງປະຕິບັດ ແລະ ລັດຖະບານກໍ່ໄດ້ຮັບຮອງເອົາ ລັດຖະບານກໍ່ຍັງເຫັນດີກັບການປ່ຽນຊື່ຂອງໂຄງການດັ່ງນີ້: (i) ໂຄງການນ້ຳສະອາດ ແລະ ລະບົບນ້ຳປະປາພາກກາງແລະພາກເໜືອ ມາເປັນໂຄງການນ້ຳປະປາຕົວເມືອງຂະໜາດນ້ອຍ ແລະ ຂະແໜງສຸຂະອານາໄມ, (ii) ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການສຳລັບແຜນງານການໃຊ້ຈ່າຍພາກລັດສຳລັບ ແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 ຂັ້ນ 2 ມາເປັນການຄຸ້ມຄອງ ການເງິນພາກລັດ, ແລະ (iii) ແຜນງານການພັດທະນາຂະແໜງການສຶກສາຂັ້ນພື້ນຖານມາເປັນແຜນງານການພັດທະນາຂະແໜງການສຶກສາ. ບັນດາໂຄງການອະນຸພາກພື້ນແມ່ນ້ຳຂອງທີ່ຢູ່ໃນ ແຜນ ລວມມີ: ໂຄງການອະນຸພາກພື້ນແມ່ນ້ຳຂອງພະລັງງານໄຟຟ້ານ້ຳຕົກນ້ຳງື່ມ 3 ແລະ ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງອະນຸພາກພື້ນແມ່ນ້ຳຂອງໃນປີ 2008, ແລະ ໂຄງການສ້າງຄວາມສາມາດໃນການປ້ອງກັນເຊື້ອ HIV/AIDS ຂອງອະນຸພາກພື້ນແມ່ນ້ຳຂອງ ແລະ ການຈັດການ ແລະ ຫຼຸດຜ່ອນຄວາມສ່ຽງໄພແຫ້ງແລ້ງ ແລະ ອຸທົກກະໄພຂອງອະນຸພາກພື້ແມ່ນ້ຳຂອງໃນປີ 2009. ແຜນງານ 2010 ໄດ້ຖືກຮັບຮອງ ແລະ ເຫັນດີຈາກລັດຖະບານ ສປປ ລາວ ແລະ ໄດ້ບັນຈຸເອົາຫ້າໂຄງການເງິນກູ້/ຊ່ວຍເຫຼືອລ້າບຸລິມມະສິດ ແລະ ຫ້າໂຄງການທີ່ບໍ່ແມ່ນເງິນກູ້ບຸລິມະສິດ (ຕາຕະລາງ 1 ແລະ 2).

12. ການປ່ຽນແປງທີ່ໄດ້ລະບຸໄວ້ໃນການດັດສົມສຳລັບປີ 2007 ແລະ ແຜນການປີ 2008-2010 ແມ່ນມີຄວາມສອດຄ່ອງກັບທິດທາງ ແລະ ແນວທາງຍຸດທະສາດ ແລະ ສະໜັບສະໜູນການປະຕິບັດງານຂອງຍຸດທະສາດແລະແຜນງານການຮ່ວມມືກັບປະເທດ, ມັນພົວພັນກັບແຜນງານທີ່ເປັນແມ່ແບບໂຄງຮ່າງຂອງໝາກຜົນຂອງການປະຕິບັດງານ ແລະ ທິດທາງຂອງຂະແໜງການ; ຜົນທີ່ຕາມມາຄືມັນບໍ່ສາມາດຮັບປະກັນໝາກຜົນຂອງແຜນງານແມ່ແບບ ແລະ ທິດທາງຂອງຂະແໜງການໄດ້ໃນເມື່ອບໍ່ມີການຫັນປ່ຽນ

## IV. ດັດສະນີຄວາມຕ້ອງການທຶນຮອນພາຍໃນຕາມແຜນ

13. ມັນໄດ້ເປັນການພິສູດໃຫ້ເຫັນແລ້ວວ່າການປະຕິບັດຍຸດທະສາດແລະແຜນງານການຮ່ວມມືກັບປະເທດໄດ້ຮັບໝາກຜົນດີໂດຍການເອົາໃຈໃສ່ປະຕິບັດງານຂອງບຸກຄະລາກອນທີ່ມີຢູ່ໃນປັດຈຸບັນ

ຈຳນວນບຸກຄະລາກອນທີ່ເປັນຊ່ຽວຊານທີ່ຕ້ອງການເພື່ອປະຕິບັດແຜນງານ ສປປ ລາວ ປີ 2007 ມີຈຳນວນທັງ 125 ຄົນ ຕໍ່ປີ ແລະ ພະນັກງານທ້ອງຖິ່ນ 5 ຄົນ ຕໍ່ປີ. ຄາດວ່າຈຳນວນພະນັກງານຊ່ຽວຊານທີ່ປະຕິບັດໂຄງການແລະບໍລິການໂຄງການ ແລະ ການຄຸ້ມຄອງຂອງແຕ່ລະຂະແໜງຈະຫຼຸດລົງມາເປັນ10ຄົນຕໍ່ປີ ເນື່ອງຈາກວ່າປະລິມານການໃຫ້ເງິນກູ້ຢືມ/ການຊ່ວຍເຫືອລ້າ ແລະ ຈຳນວນໂຄງການຊ່ວຍເຫຼືອດ້ານວິຊາການຈະຫຼຸດລົງເຊິ່ງສອດຄ່ອງກັບຈຸດສຸມຍຸດທະສາດແລະແຜນງານການຮ່ວມມືກັບປະເທດ ແລະ ຂໍ້ລິເລີ່ມທີ່ຕ້ອງໄດ້ເລືອກເຟັ້ນ. ຜ່ານມາການຊັບຊ້ອນພະນັກງານຂອງຫ້ອງການທະນາຄານພັດທະນາອາຊີປະຈຳ ສປປ ລາວແມ່ນໄດ້ມອບໝາຍໜ້າທີ່ໃຫ້ນັກເສດຖະສາດປະຈຳຫ້ອງການ ແລະ ຊ່ຽວຊານຂະແໜງສັງຄົມ, ພະນັກງານທີ່ມີຄວາມສາມາດ ຄວາມກະຕືລືລົ້ນພ້ອມກັບພະນັກງານຜູ້ຮັບຜິດຊອບການປະຕິບັດໂຄງການກໍ່ມີຄວາມສຳຄັນສູງຕໍ່ການປະຕິບັດຍຸດທະສາດ ແລະແຜນງານການຮ່ວມມືກັບປະເທດໃຫ້ໄດ້ຮັບໝາກຜົນດີ. ເພື່ອຈະກ້າວໄປເຖິງພື້ນຖານແນວທາງການຊ່ວຍເຫຼືອມັນມີຄວາມຮີບຮ້ອນ ແລະ ຈຳເປັນຈະຕ້ອງມີພະນັກງານຜູ້ທີ່ມີຄວາມສາມາດທາງດ້ານການຄຸ້ມຄອງການເງິນ, ການພັດທະນາແຜນງານ ແລະ ແນວທາງການພັດທະນາໃນທາງດຽວກັນ. ເນື່ອງຈາກວ່າມັນເປັນການການປ່ຽນແປງຂອງຄວາມສາມາດທີ່ຫຼາກຫຼາຍຂອງພະນັກງານໃນຂັ້ນເລີ່ມຕົ້ນ, ເປົ້າໝາຍການຄຸ້ມຄອງພະນັກງານແມ່ນຈະຍັງຄົງຮັກສາໃນຮູບແບບປະຈຸບັນ ປີ 2007 ຈົນຮອດ 2008-2010.

## V. ການຕິດຕາມໂດຍອີງໃສ່ຜົນຂອງການດຳງານເປັນພື້ນຖານ

14. ລັດຖະບານນຳພາຈັດຕັ້ງປະຕິບັດການປະສານງານຂອງການຊ່ວຍເຫຼືອທີ່ໄດ້ຊີ້ນຳຢູ່ໃນຖະແຫຼງການວຽງຈັນກ່ຽວກັບປະສິດທິພາບຂອງການຊ່ວຍເຫຼືອ ແລະ ແຜນງານການປະຕິບັດງານທີ່ໄດ້ໝູນໃຊ້ລະບຽບ/ນະໂຍບາຍຂອງຖະແຫຼງການປາຣີໃນການວາງເປົ້າໝາຍຂອງ ສປປ ລາວ ແລະ ຈຸດປະສົງທີ່ພົວພັນກັບຮອບວຽນຂອງແຜນງານປະຕິບັດ ແລະ ແຜນການຕິດຕາມຢ່າງໃກ້ຊິດ. ການຈັດຕັ້ງປະຕິບັດ72ແຜນການຂອງແຜນການປະຕິບັດງານຂອງປະເທດ ແມ່ນຊ່ວຍໃຫ້ການຈັດຕັ້ງປະຕິບັດແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 ໄດ້ຮັບໝາກຜົນໄວ້ຂຶ້ນ. ລັດຖະບານໄດ້ວາງເປົ້າໝາຍເພື່ອບັນລຸເປົ້າໝາຍພັດທະນາສະຫັດສະວັດກ່ອນປີ 2015 ແລະ ຈະນຳພາປະເທດຫຼຸດພົ້ນອອກຈາກຖານະປະເທດດ້ອຍພັດທະນາພາຍໃນປີ 2020, ແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6 ຍັງຈະສືບຕໍ່ຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ເສີມຂະຫຍາຍການພັດທະນາສັງຄົມຢ່າງຮີບດ່ວນ.

15. ຂະບວນການການປະຕິບັດງານປະຈຳປີຂອງຍຸດທະສາດແລະແຜນງານການຮ່ວມມືກັບປະ

ເທດໄດ້ຖືກຕິດຕາມ ແລະ ກວດກາຢ່າງໃກ້ຊິດພາຍໃຕ້ແຜນງານຂອງຜົນໄດ້ຮັບ, ໂດຍຄະນະຢັ້ງມຢາມທົບທວນຂະແໜງການຕ່າງໆໃນປະເທດ, ຄະນະຈັດຕັ້ງແຜນງານໃນປະເທດ, ແລະ ຄະນະຢັ້ງມຢາມປະເມີນຜົນການດຳເນີນງານໃນປະເທດ, ເພື່ອທີ່ຈະສະເໜີການທົບທວນຄືນຍຸດທະສາດ ແລະ ແຜນງານການຮ່ວມມືກັບປະເທດໄລຍະກາງສຳລັບປີ 2009. ພາຍໃຕ້ແຜນງານຜົນໄດ້ຮັບຂອງຍຸດທະສາດ ແລະ ແຜນງານການຮ່ວມມືກັບປະເທດຈະຍັງຄົງມີຜົນສັກສິດເຖິງແມ່ນວ່າຈະມີການດັດສົມໃນແຜນງານການຊ່ວຍເຫຼືອ. ການດັດສົມໄດ້ຊ່ວຍໃຫ້ບັນລຸເປົ້າໝາຍທີ່ວາງໄວ້ໃນບຸລິມະສິດຍຸດທະສາດຂອງຍຸດທະສາດແລະແຜນງານການຮ່ວມມືກັບປະເທດ ແລະ ແຜນງານການພັດທະນາເສດຖະກິດສັງຄົມ 5 ປີຄັ້ງທີ 6. ການທົບທວນການປະເມີນຂອງຂະແໜງການຕ່າງໆທີ່ໄດ້ຈັດຕັ້ງປະຕິບັດຮ່ວມກັນລະຫວ່າງທະນາຄານພັດທະນາອາຊີກັບລັດຖະບານ ສປປ ລາວ, ທະນາຄານໂລກ ກັບຕົວແທນການພັດທະນາສາກົນສະວິດຊ໌ ໃນເດືອນ ເມສາ ປີ 2007 ໄດ້ສະຫຼຸບວ່າ ຜົນການດຳເນີນງານແຕ່ລະຂະແໜງການທີ່ຈັດຕັ້ງປະຕິບັດໂດຍ ທະນາຄານພັດທະນາຄານພັດທະນາອາຊີແມ່ນໄດ້ຮັບໝາກຜົນດີເຊິ່ງຈັດຢູ່ໃນອັນດັບທີ່ສູງກວ່າຄ່າສະເລ່ຍຂອງການຈັດອັນດັບຂອງທະນາຄານພັດທະນາອາຊີ. ການຈັດຕັ້ງປະຕິບັດຍຸດທະສາດແລະແຜນງານການຮ່ວມມືກັບປະເທດແມ່ນເປັນໄປຕາມແຜນ ແລະ ສາມາດປະຕິບັດໄດ້ 70% ຂອງແຜນງານ 2007[6].

[6] ບົນພື້ນຖານການຮັບຮອງຂອງແຜນງານການຊ່ວຍເຫຼືອທີ່ໄດ້ວາງໄວ້ ຂອງປີ 2007

## ຕາຕະລາງ 1: ດັດສະນີແຜນການປະເພດການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2008-2010

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບຸລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$)<br>ADB<br>OCR | ADF | Total | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
|---|---|---|---|---|---|---|---|---|---|---|
| 2008 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າ | | | | | | | | | | |
| **ລະດັບຊາດ** | | | | | | | | | | |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ, ສຸກຂະອານາໄມ** | | | | | | | | | | |
| 1. ໂຄງການນ້ຳປະປາຕົວເມືອງຂະໜາດນ້ອຍ ແລະ ຂະແໜງສຸກຂະອານາໄມ | TI | ISD/ECO/ GAD | SESS | 2006 | 32.0 | 0.0 | 20.0 | 20.0 | 1.6 | 10.4 |
| **ລວມຍ່ອຍ** | | | | | **32.0** | **0.0** | **20.0** | **20.0** | **1.6** | **10.4** |
| **ພາກພື້ນ** | | | | | | | | | | |
| **ພະລັງງານ** | | | | | | | | | | |
| 1. ໂຄງການ ອະນຸພາກພື້ນແມ່ນ້ຳຂອງ ໄຟຟ້ານ້ຳງື່ມ 3 | TI | ECO/PSD/ RCI/ENV | SEID/ PSIF2 | 2007 | 52.0 | 47.0 | 0.0 | 47.0 | 5.0 | 0.0 |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | | | | |
| 2. ໂຄງການ ກາພັດທະນາການທ່ອງທ່ຽວແບບຍືນຍົງ ອະນຸພາກພື້ນແມ່ນ້ຳຂອງ | TI | ECO/PSD/ RCI/ENV | SESS | 2006 | 15.0 | 0.0 | 10.0 | 10.0 | 2.0 | 3.0 |
| **ລວມຍ່ອຍ** | | | | | **67.0** | **47.0** | **10.0** | **57.0** | **7.0** | **3.0** |
| **ລວມ** | | | | | **99.0** | **47.0** | **30.0** | **77.0** | **8.6** | **13.4** |
| 2009 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າ | | | | | | | | | | |
| **ລະດັບຊາດ** | | | | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | | | | |
| 1.ແຜນງານການພັດທະນາຂະແໜງກິສິກຳ | TI | ECO/ISD/ ENV | SEAE | 2008 | 40.0 | 0.0 | 20.0 | 20.0 | 2.0 | 18.0 |
| **ລວມຍ່ອຍ** | | | | | **40.0** | **0.0** | **20.0** | **20.0** | **2.0** | **18.0** |
| **ໂຄງການສຳຮອງ ພາກພື້ນ** | | | | | | | | | | |

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບຸລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$) | | | | |
|---|---|---|---|---|---|---|---|---|---|---|
| | | | | | | ADB | | | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
| | | | | | | OCR | ADF | Total | | |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | | | | |
| 1.ການພັດທະນາຕາໜ່າງຂົນສົ່ງພາກເໜືອ ອະນຸພາກພື້ແມ່ນ້ຳຂອງ 2 | TI | ECO/RCI | SEID | 2008 | 40.0 | 0.0 | 20.0 | 20.0 | 2.0 | 18.0 |
| **ພະລັງງານ** | | | | | | | | | | |
| 2. ໂຄງການສາຍສົ່ງໄຟຟ້າ ພາກເໜືອ ອະນຸພາກພື້ນແມ່ນ້ຳຂອງ ຂັ້ນ 1 | TI | ECO/RCI | SEID | 2006 | 22.0 | 0.0 | 20.0 | 20.0 | 2.0 | 0.0 |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | | | | |
| 3. ການບັນເທົາ ແລະການຄຸ້ມຄອງຄວາມສ່ຽງໄພແຫ້ງແລ້ງ ແລະອຸທົກກະໄພ | GI | ECO/RCI | SEAE | 2007 | 22.0 | 0.0 | 0.0 | 0.0 | 2.0 | 20.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | | | | |
| 4.ສ້າງຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນໂລກ HIV/AIDS ອະນຸພາກພື້ນແມ່ນ້ຳຂອງ [b] | TI | ISD/GAD/<br>RCI | SESS | 2008 | 10.5 | 0.0 | 5.0 | 5.0 | 0.5 | 5.0 |
| **ລວມຍ່ອຍ** | | | | | **94.5** | **0.0** | **45.0** | **45.0** | **6.5** | **43.0** |
| **ົວມ** | | | | | **134.5** | **0.0** | **65.0** | **65.0** | **8.5** | **61.0** |
| **2010 ທຶນກູ້ຢືມທີ່ແນ່ນອນ/ຊ່ວຍເຫຼືອລ້າລະດັບຊາດ** | | | | | | | | | | |
| **ການສຶກສາ** | | | | | | | | | | |
| 1.ແຜນງານການພັດທະນາຂະແໜງສຶກສາ [c] | TI | ISD/GAD/ | SESS | 2009 | 20.8 | 0.0 | 10.0 | 10.0 | 0.8 | 10.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | | | | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 2.ແຜນງານການພັດທະນາຂະແໜງສາທາລະນະສຸກ [c] | TI | ISD/GAD/ GOV | SESS | 2009 | 20.8 | 0.0 | 10.0 | 10.0 | 0.8 | 10.0 |
| **ລວມຍ່ອຍ** | | | | | **41.6** | **0.0** | **20.0** | **20.0** | **1.6** | **20.0** |
| **ໂຄງການສຳຮອງ ພາກພື້ນ** | | | | | | | | | | |
| **ກະສິກຳ ແລະ ຊັບພະຍາກອນທຳມະຊາດ** | | | | | | | | | | |
| 1. ແຜນງານຮັກສາຊີວະນາພັນ ແລວອະນຸພາກພື້ນແມ່ນ້ຳຂອງ | GI | ENV/RCI/ ISD | SEAE | 2009 | 42.0 | 0.0 | 20.0 | 20.0 | 2.0 | 20.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | | | | |
| 2.ໂຄງການກັນທ້າມການແຜ່ລະບາດຂອງເຊື້ອພະຍາດ ອະນຸພາກພື້ນແມ່ນ້ຳຂອງ 2 | GI | ISD/GAD/ RCI | SESS | 2008 | 12.8 | 0.0 | 10.0 | 10.0 | 0.8 | 2.0 |
| **ຂະແໜງການລວມ** Multisector | | | | | | | | | | |
| 3. ໂຄງການ ສຸກຂະອານາໄມ ແລະ ນ້ຳປະປາ ອະນຸພາກພື້ນແມ່ນ້ຳຂອງ | GI | RCI/ECO/ ISD/GAD | SESS | 2009 | 35.0 | 0.0 | 20.0 | 20.0 | 5.0 | 10.0 |
| **ລວມຍ່ອຍ** | | | | | **89.8** | **0.0** | **50.0** | **50.0** | **7.8** | **42.0** |
| **ົວມ** | | | | | **131.4** | **0.0** | **70.0** | **70.0** | **9.4** | **62.0** |

ADB = ທະນາຄານພັດທະນາອາຊີ; ADF = ກອງທຶນພັດທະນາອາຊີ; ECO = ການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ; ENV = ສະພາບແວດລ້ອມ; GAD = ບົດບາດຍິງຊາຍ ແລະ ການພັດທະນາ; GI = ນະໂຍບານທົ່ວໄປ; GOV = ການຄຸ້ມັດອງ; Gov't = ລັດຖະບານ; ISD = ການພັດທະນາຄວາມສາມາດຂອງອົງກອນ; OCR = ທຶນກູ້ຢືມປົກກະຕິ; PSD = ການພັດທະນາຂະແໜງເອກະຊົນ; RCI = ການເຊື່ອມໂຍງ ແລະການຮ່ວມມືພາກພື້ນ; PSIF2 = ກົນປະຕິບັດງານຂະແໜງເອກະຊົນ, ພະແນກໂຄງສ້າງການເງິນ 2; SEAE = ພະແນກກະສິກຳ ສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID = ພະແນກໂຄງລ່າງຂອງກົມອາຊີອາຄະເນ; SESS = ພະແນກສັງຄົມຂອງກົມອາຊີອາຄະເນ; SME = ວິສາຫະກິດຂະໜາດກາງ ແລະຂະໜາດນ້ອຍ; TI = ກິດຈະກຳທີ່ເລັງໃສ່ເປົ້າໝາຍ.

[a] $100 ໄດ້ຂໍອະນຸມັດເຂົ້າໃນການປະຕິບັດງານຂະແໜງເອກະຊົນຂອງທະນາຄານພັດທະນາອາຊີ ໂດຍບໍ່ມີການຄ້ຳປະກັນຈາກລັດຖະບານ

[b] ຈຳນວນເງິນທີ່ສຳຮອງທີ່ຕ້ອງແມ່ນຂຶ້ນກັບຈຳນວນເງິນຂອງການຮ່ວມທຶນທີ່ຈັດສັນໄວ້

[c] **ຈຳນວນເງິນທີ່ສຳຮອງທີ່ຕ້ອງແມ່ນຂຶ້ນກັບຈຳນວນເງິນຂອງການຮ່ວມທຶນທີ່ຈັດສັນໄວ້ ແລະແນວທາງຂອງແຜນງານ**

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

ຕາຕະລາງ 2: ດັດສະນີແຜນການປະເພດ ແລະການບໍລິການ ຂອງການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2008-2010

| | | | ແຫຼ່ງທຶນ | | | | |
|---|---|---|---|---|---|---|---|
| | | | ADB | | ອື່ນໆ | | |
| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ | ຈຳນວນ<br>($'000) | ແຫຼ່ງທຶນ | ຈຳນວນ<br>($'000) | ລວມ<br>($'000) |
| 2008 ທຶນແນ່ນອນ | | | | | | | |
| **ກະສິກຳ ແລະຊັບພະຍາກອນທຳມະຊາດ** | | | | | | | |
| 1. ການປະເມີນແຜນງານການພັດທະນາຂະແໜງກະສິກຳ | SEAE | PPTA | TASF | 700.0 | | 0.0 | 700.0 |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ ແລະນະໂຍບາຍລັດ** | | | | | | | |
| 2. ການຄຸ້ມຄອງການເງິນພາກລັດ | SEGF | ADTA | TASF | 1,100.0 | | 0.0 | 1,100.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 3.ການສະໜັບສະໜູນການພັດທະນາແຜນງານສາທາລະນະສຸກແຫ່ງຊາດ | SESS | ADTA | TASF | 500.0 | | 0.0 | 500.0 |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | |
| 4.ການສ້າງຄວາມພ້ອມຂອງແຜນງານຂະແໜງການສຳລັບຂະແໜງຂົນສົ່ງ | SEID | ADTA | TASF | 700.0 | | 0.0 | 700.0 |
| ລວມ | | | | **3,000.0** | | **0.0** | **3,000.0** |
| 2008 ພາກພື້ນ | | | | | | | |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 1. ສ້າງຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນໂລກ HIV/AIDS ອະນຸພາກພື້ນແມ່ນ້ຳຂອງ | SESS | PPTA | TASF | 500.0 | | 0.0 | 500.0 |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | |
| 2.ການປັບປຸງຕາໜ່າງການຂົນສົ່ງພາກເໜືອພາກພື້ນອະນຸແມ່ນ້ຳຂອງ 2 | SEID | PPTA | TASF | 1,000.0 | | 0.0 | 1,000.0 |
| ລວມ | | | | **1,500.0** | | **0.0** | **1,500.0** |

| ຂະແໜງ ຊື່ຂອງການຊ່ວຍເຫຼືອ | ພະແນກ ຮັບຜິດຊອບ | ປະເພດການ ຊ່ວຍເຫຼືອ | ແຫຼ່ງທຶນ: ADB ແຫຼ່ງທຶນ | ແຫຼ່ງທຶນ: ADB ຈຳນວນ ($'000) | ແຫຼ່ງທຶນ: ອື່ນໆ ແຫຼ່ງທຶນ | ແຫຼ່ງທຶນ: ອື່ນໆ ຈຳນວນ ($'000) | ລວມ ($'000) |
|---|---|---|---|---|---|---|---|
| 2009 ທຶນແນ່ນອນ | | | | | | | |
| ສຶກສາ | | | | | | | |
| 1. ແຜນງານການພັດທະນາຂະແໜງສຶກສາ | SESS | PPTA | TASF | 700.0 | | 0.0 | 700.0 |
| **ສາທາລະນະສຸກ, ສຸກຂະອະນາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 2. ແຜນງານການພັດທະນາສາທາລະນະສຸກ | SESS | PPTA | TASF | 700.0 | | 0.0 | 700.0 |
| **ກະສິກຳ ແລະຊັບພະຍາກອນທຳມະຊາດ** | | | | | | | |
| 3.ການເພີ້ມຄວາມຫຼາກຫຼາຍແລະທັນສູ່ການຜະລິດກະສິກຳເພື່ອເປັນສິນຄ້າ:ສ້າງຄວາມສາມາດໃນການໄຈ້ແຍກທ່າແຮງກະສິກຳ | SEAE | ADTA | TASF | 400.0 | | 0.0 | 400.0 |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ ແລະນະໂຍບາຍລັດ** | | | | | | | |
| 4. ການເຊື່ອມເຂົ້າຂອງແຜນງານຍຸດທະສາດການຄຸ້ມຄອງການໃຊ້ຈ່າຍພາກລັດ | SEGF | ADTA | TASF | 700.0 | | 0.0 | 700.0 |
| **ຂະແໜງການລວມ** | | | | | | | |
| 5. ການປະເມີນຄວາມທຸກຍາກແບບມີສ່ວນຮ່ວມ(ID) | LRM | ADTA | TASF | 500.0 | | 0.0 | 500.0 |
| Total | | | | **3,000.0** | | **0.0** | **3,000.0** |

# ພາກພື້ນ

**ກະສິກຳ ແລະຊັບພະຍາກອນທຳມະຊາດ**

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ: ADB<br>ແຫຼ່ງທຶນ | ແຫຼ່ງທຶນ: ADB<br>ຈຳນວນ ($'000) | ແຫຼ່ງທຶນ: ອື່ນໆ<br>ແຫຼ່ງທຶນ | ແຫຼ່ງທຶນ: ອື່ນໆ<br>ຈຳນວນ ($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 1. ແຜນງານຮັກສາຊີວະນາໆພັນ ແລວອະນຸພາກພື້ນແມ່ນ້ຳຂອງ (GMS) | SEAE | PPTA | TASF | 1,000.0 | | 0.0 | 1,000.0 |
| **ການຄຸ້ມຄອງຂີ້ເຫຍື້ອ, ນ້ຳປະປາ ແລະ ສາທາລະນະສຸກ** | | | | | | | |
| 2. ໂຄງການສາທາລະນະສຸກ ແລະນ້ຳປະປາ ອະນຸພາກພື້ນແມ່ນ້ຳຂອງ | SESS | PPTA | TASF | 450.0 | UN-HABITAT | 500.0 | 950.0 |
| **ສາທາລະນະສຸກ, ສຸກຂະອານາໄມ, ແລະ ການປົກປ້ອງສັງຄົມ** | | | | | | | |
| 3. ໂຄງການປ້ອງກັນການລະບາດຂອງເຊື້ອພະຍາດ ອະນຸພາກພື້ນແມ່ນ້ຳຂອງ 2 | SESS | PPTA | TASF | 500.0 | | 0.0 | 500.0 |
| ລວມ | | | | **1,950.0** | | **500.0** | **2,450.0** |
| **2010 ທຶນແນ່ນອນ** | | | | | | | |
| **ຄົມມະນາ ແລະ ຂົນສົ່ງ** | | | | | | | |
| 1.ແຜນງານການພັດທະນາຂະແໜງຂົນສົ່ງ | SEID | PPTA | TASF | 1,000.0 | | 0.0 | 1,000.0 |
| **ອຸດສະຫະກຳ ແລະການຄ້າ** | | | | | | | |
| 2. ການຄຸ້ມຄອງການເງິນພາກລັດ | SEGF | ADTA | TASF | 700.0 | | 0.0 | 700.0 |
| 3. ການພັດທະນາຂະແໜງການເງິນ ແລະຂະແໜງເອກະຊົນ | SEGF | ADTA | TASF | 700.0 | | | 700.0 |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ ແລະນະໂຍບາຍລັດ** | | | | | | | |
| 4. ການຈັດຕັ້ງປະຕິບັດແຜນການຫ້າປີຄັ້ງທີເຈັດ | LRM | ADTA | TASF | 600.0 | | 0.0 | 600.0 |
| **ພາກພື້ນ** | | | | | | | |
| **ຂະແໜງການລວມ** | | | | | | | |

| ຂະແໜງ ຊື່ຂອງການຊ່ວຍເຫຼືອ | ພະແນກ ຮັບຜິດຊອບ | ປະເພດການ ຊ່ວຍເຫຼືອ | ແຫຼ່ງທຶນ ADB ແຫຼ່ງທຶນ | ADB ຈຳນວນ ($'000) | ອື່ນໆ ແຫຼ່ງທຶນ | ອື່ນໆ ຈຳນວນ ($'000) | ລວມ ($'000) |
|---|---|---|---|---|---|---|---|
| 1. ການພັດທະນາຕົວເມືອງແລວ ອະນຸພາກພື້ນແມ່ນ້ຳຂອງ | SESS | PPTA | TASF | 500.0 | PRC | 500.0 | 1,000.0 |
| **ລວມ** | | | | **3,500.0** | | **500.0** | **4,000.0** |

ADB = ທະນາຄານພັດທະນາອາຊີ; ADTA = ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ; Gov't = ລັດທະບານ; GMS = ອະນຸພາກພື້ນແມ່ນ້ຳຂອງ; LRM = ຫ້ອງການທະນາຄານພັດທະນາອາຊີປະຈຳ ສປປ ລາວ; PEMSP = ແຜນຍຸດທະສາດການຄຸ້ມຄອງການໃຊ້ຈ່າຍພາກລັດ; PPTA = ການຊ່ວຍເຫຼືອວິວຊາການການກະກຽມໂຄງການ; PRC = ປະເທດຈີນ; SEAE = ກົມອາຊີອາຄະເນ, ພະແນກສະພາບແວດລ້ອມ ແລະທຳມະຊາດ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID = ພະແນກໂຄງລ່າງຂອງກົມອາຊີອາຄະເນ; SESS = ພະແນກສັງຄົມຂອງກົມອາຊີອາຄະເນ; SME =ວິສາຫະກິດຂະໜາດກາງ ແລະຂະໜາດນ້ອຍ; TASF = ກອງທຶນການຊ່ວຍເຫຼືອພິເສດດ້ານວິຊາການ; UNHABITAT = ແຜນງານການຍົກຍ້າຍຖິ່ນຖານຂອງອົງການສະຫະປະຊາຊາດ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ຕາຕະລາງ 3: ສັງລວມຂໍ້ມູນຂອງປະເພດ ແລະການບໍລິການ ຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຍຊ່ວຍເຫຼືອລ້າ ແລະການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້, 2008

| ກ. ປະເພດຂອງເງິນກູ້ ແລະ ການຊ່ວຍເຫຼືອລ້າ | |
|---|---|
| **ຊື່ໂຄງການ** | **ໂຄງການຂະແໜງສຸກຂະອານາໄມ ແລະນໍ້າປະປາຕົວເມືອງຂະໜາດນ້ອຍ ($20 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍຂອງໂຄງການແມ່ນແນໃສ່ເພື່ອຫຼຸດຜ່ອນຄວາມທຸກຍາກແລະປັບປຸງຊີວິດການເປັນຢູ່ຂອງຜູ້ອາໃສໃນເຂດຕົວເມືອງນ້ອຍໂດຍການຍົກລະດັບການເຂົ້າເຖິງການນຳໃຊ້ນໍ້າ ແລະການບໍລິການສຸກຂະອານາໄມ ທີ່ມີຄຸນນະພາບ. ພ້ອມກັນນີ້ມັນຍັງຊ່ວຍສະໜັບສະໜູນ ການພັດທະນາຂອງຕົວເມືອງຂະໜາດນ້ອຍ ທີ່ຖືວ່າເປັນການຄຸ້ມຄອງຫຼັກ ແລະຈຸດໃຈກາງທີ່ສຳຄັນຂອງການເຕີບຂອງເສດຖະກິດແບບຍືນຍົງ.ໂຄງການສະໜັບສະໜູນນະໂຍບາຍຂະແໜງນໍ້າປະປາສູ່ທ້ອງຖິ່ນຂອງລັດຖະບານ ແລະປະກອບສ່ວນໃສ່ເປົ້າໝາຍໃນການຕອບສະໜອງນໍ້າດື່ມໃຫ້ປະຊາຊົນໃນເຂດເທດສະບານເມືອງໃຫ້ໄດ້ 80% ພາຍໃນປີ 2020. ໂຄງການຈະສຸມໃສ່ຂົງເຂດດັ່ງນີ້: (i) ປັບປຸງ ແລະພັດທະນາລະບົບນໍ້າປະປາ, ລວມທັງວຽກງານການສ້ອມແປງຄືນບາງສ່ວນຂອງລະບົບນໍ້າປະປາທີ່ມີມາກ່ອນ.; (ii) ຫຼຸດຜ່ອນການປ່ອຍນໍ້າເສຍ ແລະປັບປຸງສຸກຂະອານາໄມ, ພ້ອມກັບການເຮັດໃຫ້ສະພາບແວດລ້ອມໃນຂັ້ນບ້ານດີຂື້ນ; (iii) ເຜີຍແຜ່ການນຳໃຊ້ນໍ້າ ແລະ ຮັກສາສຸກຂະອານາໄມ, ລວມທັງການສົ່ງເສີມການມີສ່ວນຮ່ວມຂອງຊຸມຊົນ ແລະແມ່ຍິງໃນວຽກງານສາທາລະນະສຸກແລະນໍ້າປະປາ;(iv) ການປະຕິຮູບຂອງພາກລັດ ແລະ ສະຖາບັນເປັນການສ້າງຄວາມເຂັ້ມແຂງໃຫ້ກັບໂຄງຮ່າງລະບຽບຂອງຂະແໜງນໍ້າປະປາເພື່ອຊ່ວຍໃຫ້ອຳນາດການປົກຄອງນໍ້າປະປາປະຢັດຕົ້ນທຶນໃນການຜະລິດນໍ້າ ແລະ ຮັບປະກັນຖານະການເງິນຂອງແຂວງຢ່າງໝັ້ນຄົງ ,ພ້ອມນີ້ຍັງສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ; (v) ການສ້າງຄວາມສາມາດ ແລະການຝຶກອົບຮົມອຳນາດການປົກຄອງປະຈຳ, ອົງການຈັດຕັ້ງນໍ້າປະປາທ້ອງຖິ່ນ, ໜ່ວຍງານນໍ້າປະປາ ແລະສຸກຂະອານາໄມຂັ້ນບ້ານ; (vi) ການຊ່ວຍເຫຼືອການຈັດຕັ້ງປະຕິບັດໂຄງການ |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະພັດທະນາລະບົບນໍ້າປະປາ ແລະປັບປຸງເງື່ອນໄຂສຸກຂະອານາໄມໃນ 20 ຕົວເມືອງບູລິມະສິດທີ່ທຸກຍາກ ແລະເມືອງທີ່ທຸກຍາກອື່ນໆໃນ ສປປ ລາວ. ເຂດເທດສະບານເມືອງທີ່ມີປະຊາກອນແຕ່ 2000-20,000 ຄົນແມ່ນຖືກພິຈາລະນາໃຫ້ເປັນຕົວເມືອງນ້ອຍ. ໂດຍສະເລ່ຍ, ບັນດາຕົວເມືອງນ້ອຍທີ່ຄາດວ່າຈະມີພົນລະເມືອງຫຼາຍກ່ວາ 4000ຄົນຈະຖືກພິຈາລະນາເຂົ້າຢູ່ໃນໂຄງການໃນປີ 2015. ໂຄງການຈະພິຈາລະນາພຽງແຕ່ວຽກງານການສ້ອມແປງຄືນເພື່ອທີ່ຈະຕິດຕັ້ງແລະປັບປຸງການນຳໃຊ້ຂອງລະບົບນໍ້າປະປາທີ່ມີມາກ່ອນເທົ່ານັ້ນ. ຈຳນວນຕົວເມືອງທີ່ຈະຖືກພິຈາລະນາໃນຂັ້ນສຸດທ້າຍແມ່ນຂື້ນກັບທຶນຂອງໂຄງການ, ແລະທະນາຄານພັດທະນາອາຊີເປັນຜູ້ສະໜອງທຶນ ແລະຮ່ວມທຶນ. ໂຄງການຈະໃຫ້ການຊ່ວຍເຫຼືອການຈັດຕັ້ງປະຕິບັດແຜນການລົງທຶນຂະແໜງນໍ້າປະປາ. |
| **ຊື່ໂຄງການ** | **ໂຄງການພັດທະນາພະລັງງານໄຟຟ້ານໍ້າຕົກ ນໍ້າງື່ມ 3 ອານຸພາກພື້ນແມ່ນໍ້າຂອງ ($47.0 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການໄດ້ມີສ່ວນຮ່ວມໃນການພັດທະນາ, ກໍ່ສ້າງ ແລະດຳເນີນການຜະລິດ ຂອງເຄື່ອນໄຟຟ້າທີ່ມີກຳລັດຕິດຕັ້ງຂະໜາດ 440 ເມກາວັດ (MW) ທີ່ມີຄວາມອາດສາມາດໃນການຜະລິດພະລັງງານໄຟຟ້າ 2,191 ກິກາວັດໂມງ. ໂຄງການແມ່ນຢູ່ພາຍໃຕ້ການຮ່ວມມືລັດເອກະຊົນລະຫວ່າງກົມປະຕິບັດງານຂະແໜງ ເອກະຊົນ ແລະ ພະແນກໂຄງລ່າງຂອງກົມອາຊີອາຄະເນໃນການສະໜັບສະໜູນເປົ້າໝາຍການຂະຫຍາຍຕົວຂອງເສດຖະກິດຂອງ ສປປ ລາວ ໃນຄະນະດຽວກັນ ເພື່ອແນໃສ່ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂະແໜງໄຟຟ້າຝ່າຍຜະລິດຂອງປະເທດໄທ. ໂຄງການຕັ້ງຢູ່ໃນບໍລິເວນແມ່ນໍ້າງື່ມ, ຢູ່ເໜືອອ່າງ ເກັບນໍ້າງື່ມ 1 ປະມານ 58 ກິໂລແມັດ ໃນເມືອງໄຊສົມບູນ. ການຈັດຕັ້ງປະຕິບັດໂຄງການແມ່ນຢູ່ພາຍໃຕ້ສັນຍາສຳປະທານກັບລັດຖະບານມີອາຍຸສັນຍາ 25 ປີ ນັບຕັ້ງແຕ່ ມື້ທີ່ເລີ້ມຕົ້ນຜະລິດເພື່ອສົ່ງຂາຍ. ບໍລິສັດໄຟຟ້ານໍ້າງື່ມ 3 ຈະເຊັນສັນຍາຊື້ຂາຍກັບ ອົງການໄຟຟ້າຝ່າຍຜະລິດຂອງປະເທດໄທເພື່ອທີ່ຈະສົ່ງຂາຍປະມານ 90%ຂອງກຳລັງໄຟຟ້າທີ່ຜະລິດໄດ້ພາຍໃຕ້ເງື່ອນໄຂສົ່ງສິນຄ້າແລະຈ່າຍທັນທີເປັນເວລາ 25 ປີ. ໂຕເຄື່ອນຈະເຮັດໜ້າທີ່ຄືກັບລະບົບກັກເກັບນໍ້າ ໂດຍອ່າງເກັບນໍ້າສາມາດເກັບນໍ້າໄດ້ 3,000,000 ແມັດກ້ອນ ແລະໂຕເຄື່ອນ. ຮູບແບບຂອງເຄື່ອນປະກອບດ້ວຍ: (i) ສະຖານນີຜະລິດໄຟຟ້າໃຕ້ດິນທີ່ມີກຳລັງຕິດຕັ້ງຂະໜາດ 2 x 220 ເມກາວັດ (MW), (ii) ຄວາມສູງຂອງສັນເຄື່ອນ 220 ແມັດ |

| | |
|---|---|
| | ສາມາດເກັບຮັກສານ້ຳໄດ້ 3,000,000 ແມັດກ້ອນ, ແລະ (iii) ສາຍສົ່ງຂະໜາດ 250 ກິໂລໂວນ ຍາວ 105 ກິໂລແມັດ ທາສະຖານນີຍ່ອຍບ້ານນາບົງ |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການແມ່ນໜຶ່ງໃນບັນດາໂຄງການທີ່ສຳຄັນທີ່ປະກອບຢູ່ໃນແຜນການສົ່ງອອກພະລັງງານຂອງລັດຖະບານ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການພະລັງງານຂອງປະເທດໄທ. 3,300 ເມກາວັດ ຈະສົ່ງອອກໄປປະເທດໄທພາຍໃຕ້ບົດບັນທຶກຄວາມເຂົ້າໃຈໃນປີ1996. ໂຄງການປະກອບສ່ວນໃຫ້ລັດຖະບານໃນການພັດທະນາຄວາມສາມາດໃນການຜະລິດໄຟຟ້າເພື່ອສົ່ງອອກ. ລາຍໄດ້ຈາກການສົ່ງອອກພະລັງງານພາຍໃຕ້ໂຄງການ (ປະມານ$600ລ້ານໃນໄລຍະ25ປີ) ທີ່ຈະຖືກນຳໃຊ້ໃນແຜນງານພັດທະນາຂອງລັດຖະບານຕໍ່ໄປ. ພ້ອມກັນນີ້, 8% ຂອງກຳລັງການຜະລິດຂອງໂຄງການຈະສະໜອງໃຫ້ແກ່ໄຟຟ້າລາວ ແລະຈະຊ່ວຍຕອບສະໜອງໄຟຟ້າໃຫ້ທ້ອງຖິ່ນເພີ້ມຂື້ນ. ຍັງມີບາງໂຄງການພາຍໃຕ້ລະບົບພະລັງງານຂອງ ສປປ ລາວ ແລະປະເທດລາວໄທ ທີ່ຈະສົ່ງອອກໄຟຟ້າຈາກ ສປປ ລາວ: (i) ນ້ຳງື່ມ, ນ້ຳເທີນ ແລະ ເຊກອງ ແມ່ນມີຍຸດທະສາດທີ່ຈະຕອບສະໜອງໃຫ້ແກ່ທັງສອງປະເທດ (ກ) ພາກເໜືອຂອງປະເທດໄທທີ່ຂາດຄວາມສາມາດໃນການຜະລິດ; ແລະ (ຂ)ກຸງເທບປະລິມົນທົນ; (ii) ຄວາມຕ້ອງການຊົມໃຊ້ສູງສຸດຂອງ ສປປ ລາວ ແລະ ໄທ ມີຄາວມແຕກຕ່າງກັນ ດັ່ງນັ້ນມັນສາມາດຜັດປ່ຽນກັນຊົມໃຊ້ມື້ຕໍ່ມື້; ແລະ (iii) ການຕອບສະໜອງພະລັງງານຈາກ ສປປ ລາ ວ ຍັງຊ່ວຍໃຫ້ປະເທດໄທຫຼຸດຜ່ອນການນຳເຂົ້າແກ໋ດສນຳມະຊາດຈາກປະເທດພະມ້າ. ເພາະສະນັ້ນ, ຍຸດທະສາດຂອງໂຄງການບໍ່ພຽງແຕ່ຕອບສະໜອງພະລັງງານໃຫ້ແກ່ພາກເໜືອຂອງປະເທດໄທເທົ່ານັ້ນ, ແຕ່ມັນຍັງສອດຄ່ອງກັບຍຸດທະສາດຂອງປະເທດໄທໃນການຊອກຫາແຫຼ່ງສະໜອງພະລັງງານ. ໂຄງການຍັງສອດຄ່ອງກັບຍຸດທະສາດອະນຸພາກພື້ນແມ່ນ້ຳຂອງ ຂອງທະນາຄານພັດທະນາອາຊຸເພື່ອສົ່ງເສີມການມີສ່ວນຮ່ວມຂອງຂະແໜງເອກະຊົນໃຫ້ຫຼາຍຂຶ້ນໃນການພັດທະນາແລະເຊື່ອມຕໍ່ຫຼາຍຂື້ນ. |
| ຊື່ໂຄງການ | **ໂຄງການພັດທະນາການທ່ອງທ່ຽງແບບຍືນຍົງ ອະນຸພາກພື້ນແມ່ນ້ຳຂອງ ($15.0 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການມີເປົ້າໝາຍຈະຫຼຸດຜ່ອນຄວາມທຸກຍາກ ໃນອະນຸພາກພື້ນມແມ່ນ້ຳຂອງ, ປະກອບສ່ວນໃຫ້ແກ່ການເຕີບໂຕຂອງເສດຖະກິດ, ສົ່ງເສີມການມີວຽກເຮັດງານທຳ, ແລະສົ່ງເສີມການອານຸລັກທຳມະຊາດແລະມໍລະດົກທາງວັດທະນາທຳ.ເປົ້າໝາຍຫຼັກຂອງໂຄງການແມ່ນສົ່ງເສີມການທ່ອງທ່ຽວແບບຍືນຍົງໃນບັນດາປະເທດທີ່ຢູ່ຕອນໄຕ້ຂອງອ່າງແມ່ນ້ຳຂອງໂດຍຜ່ານການປັບປຸງໂຄງລ່າງ,ສົ່ງເສີມການມີສ່ວນຮ່ວມຂອງພາກເອກະຊົນແລະຊຸມຊົນ, ແລະການຮ່ວມມືອະນຸພາກພື້ນ. ໂຄງການຈະປັບປຸງໂຄງລ່າງການທ່ອງທ່ຽວບູລິມະສິດໃນກຳປູເຈັຍ, ສປປ ລາວ, ແລະ ຫວຽດນາມ, ຫຼຸດຜ່ອນຄວາມທຸກຍາກ, ເນັ້ນໜັກການທ່ອງທ່ຽວຊຸມຊົນແບບຍືນຍົງໃນເຂດຊົນນະບົດ, ແລະ ສົ່ງເສີມການຮ່ວມມືອະນຸພາກພື້ນ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການປະກອບສ່ວນຕໍ່ເປົ້າໝາຍຍຸດທະສາດຂະແໜງການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງໃນການພັດທະນາທິດທາງການທ່ອງທ່ຽວໃນອະນຸພາກພື້ນແມ່ນ້ຳຂອງທີ່ມີຄວາມຍືນຍົງ, ເທົ່າທຽມ, ຮັບປະກັນການຫຼຸດຜ່ອນຄວາມທຸຍາກ,ສັງຄົມມມີຄວາມຮັບຜິດຊອບແລະສາມາດແຂ່ງຂັນໃນເອທີສາກົນ.ໂຄງການຈະຊ່ວຍຫຼຸດຜ່ອນການເຊື່ອມໂຊມຂອງທຳມະຊາດ, ພັດທະນາຊັບພະຍາກອນມະນຸດ, ແລະສົ່ງເສີມການຮ່ວມມືແລະຫວ່າງພາກລັດແລະເອກະຊົນໃນອະນຸພາກພື້ນແມ່ນ້ຳຂອງໂດຍຈັດຕັ້ງຄະນະບໍລິຫານສົ່ງເສີມ ແລະການຕະຫຼາດການທ່ອງທ່ຽວ. |

**ຂ. ການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ**

| | |
|---|---|
| **ຊື່ໂຄງການ** | ສ້າງຄວາມເຂັ້ມແຂງໃຫ້ແກ່ການປ້ອງກັນໂລກ HIV/AIDS ອະນຸພາກພື້ນແມ່ນ້ຳຂອງ (ການຊ່ວຍເຫຼືອວິຊາການການກະກຽມໂຄງການ[PPTA] **ສຳລັບ $0.500 ລ້ານ )** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການມີເປົ້າໝາຍທີ່ຈະຊ່ວຍຈຳກັດການແຜ່ຂະຫຍາຍຂອງເຊື້ອHIV/AIDSໃນອະນຸພາກພື້ນແມ່ນ້ຳຂອງ. ໂຄງການໄດ້ຖືກອອກແບບເພື່ອສະໜັບສະໜູນການພັດທະນາຄວາມສາມາດສະເພາະຂອງຊັບພະຍາກອນມະນຸດສຳລັບການປັບປຸງການຄຸ້ມຄອງແຫຼ່ງແຜ່ເຊື້ອ HIV/AIDS ແລະແຜນງານໃນອະນຸພາກພື້ນແມ່ນ້ຳຂອງ, ໂດຍສະເພາະແມ່ນພົວພັນກັບໂຄງການໂຄງລ່າງຂະໜາດໃຫ່ຍ ແລະ ການພັດທະນາຂອງສູນເສດຖະກິດ. ແຜນງານການຝຶກອົບຮົມພາກພື້ນ ໃຫ້ແກ່ບັນດາຫົວໜ້າແຜນງານລະດັບກາງ HIV/AIDS ໃນຂົງເຂດການເງິນສາກົນ ,ການອອກແບບແຜນງານ ແລະການຈັດຕັ້ງປະຕິບັດ, ການຕິດຕາມ ແລະການປະເມີນຜົນ, ໂດຍສຸມໃສ່ຜູ້ຈັດການແລະຄວາມຮູ້ທີ່ຕ້ອງການສຳລັບແຜນງານການປ້ອງກັນທີ່ຕິດພັນກັບບັນດາໂຄງການພັດທະນາໂຄງລ່າງ ( ເສັ້ນທາງ, ທາງລົດໄຟ, ແລະພະລັງງານ, ສູນກາງການຂະຫຍາຍຕົວຂອງເສດຖະກິດ ແລະ ເຂດຊາຍແດນຂ້າມຜ່ານ. ການຊ່ວຍເຫຼືອວິຊາການການກະກຽມໂຄງການ **[PPTA] ລວມມີ:** (i) **ແຜນງານການເກັບກຳຂໍ້ມູນ, ການວິເຄາະ,** |

| | |
|---|---|
| | **ການຖ່າຍທອດຄວາມຮູ້ຄວາມສາມາດທີ່ພົວພັນກັບການຈັດຕັ້ງການປະເມີນຜົນກະທົບຂອງຄວາມທຸກຍາກ ແລະເສດຖະກິດເພື່ອສະໜັບສະໜູນນະໂຍບາຍ ແລະເປົ້າໝາຍຂອງແຜນງານ; (ii) ການສະໜັບສະໜູນແຜນງານການຄວບຄຸມHIV/AIDS ແລະຄວາມສາມາດສຳລັບກິດຈະກຳການຄວບຄຸມໂດຍຜ່ານການພັດທະນາຂອງຄວາມສາມາດທາງດ້ານວິຊາການໃນດ້ານລະບາດວິທະຍາ,ນັກວິທະຍາສາດສັງຄົມ ແລະອື່ນໆ. ໃນການຈັດຕັ້ງປະຕິບັດ, ການວິເຄາະ ແລະການນຳໃຊ້ຂໍ້ມູນການຄວບຄຸມໃນການປັບປຸງຜົນຕອບສະໜອງຂອງແຜນງານ.** |
| ຜົນທີ່ຄາດວ່າຈະໄດ້ຮັບ | ສ້າງຜູ້ຈັດການວິຊາການຂະແໜງສັງຄົມ ແລະຄຸ້ມຄອງພ້ອມກັນກັບຄວາມສາມາດສຳລັດການພັດທະນາແຜນປ້ອງກັນ ແລະການຄຸ້ມຄອງ HIV/AIDS |
| **ຊື່ໂຄງການ** | **ການສະໜັບສະໜູນການພັດທະນາແຜນງານສະທາລະນະສຸກ** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ**[PPTA] ສຳລັບ $0.500 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍຂອງການຊ່ວຍເຫຼືອແມ່ນເພື່ອປັບປຸງດັດຊະນີໂຕຊີ້ບອກສາທາລະນະສຸກ ແລະ ບັນລຸເປົ້າໝາຍພັດທະນາສະຫັດສະວັດທາງດ້ານສາທາລະນະສຸກກ່ອນປີ 2015. ຈຸດປະສົງຂອງການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ ແລະ ການຊ່ວຍເຫຼືອວິຊາການການກະກຽມໂຄງການແລະຈຸດປະສົງແຜນງານພື້ນຖານແມ່ນເພື່ອຊ່ວຍເຫຼືອກະຊວງສາທາລະນະສຸກພັດທະນາໃຫ້ໄດ້ຮັບໝາກຜົນຂອງແຜນງານສາທາລະນະສຸກແຫ່ງຊາດ ໃນການພັດທະນາຂະແໜງການສາທາລະນະສຸກສັງຄົມ. ເປົ້າໝາຍປະກອບມີ (i) ປັບປຸງການນຳໃຊ້ຄຸນນະພາບແລະການບໍລິການທີ່ສາມາດຕອບສະໜອງ, ແລະ (ii) ປັບປຸງປະສິດທິພາບ, ພຽງພໍແລະລະບົບສາທາລະນະສຸກທີ່ເທົ່າທຽມກັນ. ຄຽງຄູ່ ກັບການຊ່ວຍຂອງບັນດາຄູ່ພັດທະນາ,ການຊ່ວຍເຫຼືອດ້າວິຊາການຈະຊ່ວຍໃຫ້ກະຊວງສາທາ (i) ວິເຄາະຄວາມເປັນໄປໄດ້ຂອງການນຳໃຊ້ແຜນງານສາທາລະນະສຸກທີ່ໄດ້ປະສິດທິພາບໃນການພັດທະນາລະບົບສາທາລະນະສຸກ, ແລະ(ii) ພັດທະນາຄວາມແທດເໝາະ ແລະແຜນງານແຕ່ລະຂັ້ນຕອນ. ໂດຍອີງໃສ່ວຽກງານທີ່ໄດ້ດຳເນີນຜ່ານມາ ແລະກຳລັງດຳເນີນຢູ່,ລວມມີ (i)ສືບຕໍ່ສ້າງຄວາມສາມາດໃຫ້ກະຊວງສາທາລະນະສຸກໃນການຈັດຕັ້ງປະຕິບັດແຜນງານສາທາລະນະສຸກແຫ່ງຊາດ; (ii) ເພີ່ມການຮ່ວມທຶນເຂົ້າໃນແຜນການໄລຍະຍາວຂອງຂະແໜງສາທາໃນ ສສປ ລາວ; (iii)ວາງແນວຄວາມຄິດໂດຍລວມຂອງແຜນງານສາທາລະນະສຸກແຫ່ງຊາດ ແລະ ບັນດາຂະແໜງການ ປະສານງານອື່ນໆ( ເຊັ່ນ: ຂັ້ນຕອນ, ການສ້າງຈຸດປະສານ, ຄວາມຕ້ອງການຂອງການປະສານງານ ແລະການຕິດຕາມ); (iv) ມີການປຶກສາຫາລືພາຍໃນຂອງແຕ່ລະກະຊວງ, ໂດຍສະເພາະແມ່ນການປຶກສາຫາລືທີ່ແນ່ໃສ່ການຊ່ວຍເຫຼືອແຜນງານທີ່ເນັ້ນໃສ່ຜົນໄດ້ຮັບ ເພື່ອຊ່ວຍໃຫ້ການຈັດສັນຂະແໜງ ການເພີ່ມຂຶ້ນ ແລະ ປັບປຸງປະສິດທິພາບຂອງ ການຈັດສັນ; (v) ມີການປຶກສາຫາລືກັບບັນດາຄູ່ພັດທະນາເພື່ອເຫັນດີໃນການສະໜັບສະໜູນແຜນງານສາທາລະນະສຸກແຫ່ງຊາດແລະການປະສານງານການຊ່ວຍເຫຼືອກັບຂະແໜງການອື່ນໆ;(vi) ສະໜັບສະໜູນຄ່າໃຊ້ຈ່າຍໃນການສຶກສາດ້ານສາທາລະນະສຸກ; (vii) ປະເມີນແນວທາງການປະຕິບັດເພື່ອກ້າວໄປສູ່ແຜນງານແລະການຄຸ້ມຄອງແບບເຊື່ອມໂຍງ. ສປປ ລາວ ກຳລັງປະເຊີນໜ້າກັບເຊື້ອໂລກຢ່າງໜັກ, ຈຳນວນປະຊາກອນທີ່ທຸກຍາກມີຫຼາຍ, ຂະແໜງການສາທາບໍ່ສາມາດຕອບສະໜອງໄດ້ເມື່ອທຽບໃສ່ຄວາມຕ້ອງການ.ສາທາລະນະສຸກແມ່ນມີຄວາມສຳຄັນສຳລັບຜູ້ທຸກຍາກທີ່ໃຊ້ຮ່າງກາຍອອກແຮງງານ ແລະສູນເສຍໂອກາດໃນການໃຊ້ບໍລິການສາທາລະນະສຸກ.ເບິ່ງໃນແງ່ເສດຖະກິດແລ້ວ, ການສູນເສຍລາຍໄດ້ເນື່ອງຈາກການເຈັບປ່ວຍໂດຍທີ່ບໍ່ລວມເອົາການຮັກສາ ແລະຄ່າໃຊ້ຈ່າຍກາລະໂອກາດ, ອາດຈະເຮັດໃຫ້ລວມຍອດຜະລິດຕະພັນ ພາຍໃນຫຼຸດລົງ 8-9%. |
| ຜົນທີ່ຄາດວ່າຈະໄດ້ຮັບ | ໂຄງການຈະໃຫ້ການຊ່ວຍເຫຼືອ (i) ຢືນຢັນ ແລະ ແຜນການພັດທະນາຂະແໜງສາທາລະນະສຸກສຳລັບ ສປປ ລາວ ຈະຍັງຕ້ອງມີການດັດແປງຫຼືບໍ່, (ii) ຈັດຫາພື້ນຖານການວິເຄາະສຳລັບການສະເໜີທຶນລົມທົບໃຫ້ຂະແໜງການ. (iii) ກ້າວໄປເຖິງຂໍ້ຕົກລົງ ແລະ ບາດກ້າວຂອງແຜນງານສາທາລະນະສກຸແຫ່ງຊາດ ແລະ ການປະສານງານການຊ່ວຍເຫຼືອ, (v) ກະກຽມແນວທາງການພັດທະນາແຜນງານສາທາລະນະສຸກໃຫ້ສອດຄ່ອງ ໃນ ສປປ ລາວ, ແລະ (v) ສ້າງຄວາມສາມາດໃຫ້ກະ ຊວງສາທາລະນະສຸກ. |
| **ຊື່ໂຄງການ** | **ການຄຸ້ມຄອງການງານພາກລັດ (ໂຄງການເກົ່າ ຂອງການວາງແຜນການໃຊ້ຈ່າຍພາກລັດ, ຂັ້ນສອງ)**<br>(ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການADTA **ສຳລັບ $1.1 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການປະກອບສ່ວນໃນການປັບປຸງການຈັດສັນແຫຼ່ງທຶນພາກລັດຢ່າງມີປະສິດທິພາບອີງຕາມເປົ້າໝາຍຍຸດທະສາດການຫຼຸດຜ່ອນຄວາມທຸກຍາກແລະການພັດທະນາຂອງລັດຖະບານ, ໃນການກ້າວໄປສູ່ມາດຕະຖານການປະຕິບັດງານແບບສາກົນຂອງຂະແໜງການຄຸ້ມຄອງການເງິນ.ນີ້ແມ່ນຢູ່ພາຍໃຕ້ການຊ່ວຍເຫຼືອດ້ານວິຊາການໃນການຊ່ວຍເຫຼືອ ໂຄງການວາງແຜນໃຊ້ຈ່າຍພາກລັດ ສຳລັບການຈັດຕັ້ງປະຕິບັດ NGPES ທີ່ໄດ້ປະຕິບັດແລ້ວຈາກປີ 2006 ຫາ ເດືອນສິງຫາ ປີ 2007, ແລະ ໄດ້ວາງໂຄງຮ່າງຂອງການວາງແຜນງົບປະມານໄລຍະກາງແລະການວາງແຜນການໃຊ້ຈ່າຍພາກລັດ (MTEF). ມັນໄດ້ທົດລອງປະຕິບັດແນວທາງດັດສະນີການວາງແຜນການໃຊ້ຈ່າຍພາກ |

| | |
|---|---|
| | ລັດ (MTEF) ໃນສອງຂະແໜງການ (ສາທາ ແລະ ສຶກສາ). ພ້ອມກັນນີ້ ໂຄງການຍັງໃຫ້ຄຳປຶກສາແກ່ກະຊວງການເງິນ ໃນການຮ່າງກົດໝາຍວ່າດ້ວຍກົດໝາຍງົບປະມານ, ມັນຍັງເຜີຍແຜ່ກົດໝາຍງົບປະມານໃນທົ່ວປະເທດ. ໂຄງການຊ່ວຍເຫຼືອດ້ານວິຊາການໃໝ່ຈະຈັດຕັ້ງປະຕິບັດງານຂັ້ນລິເລີ່ມຂອງໂຄງການແຜນການໃຊ້ຈ່າຍພາກລັດ ສຳລັບ NGPES ແລະຂະຫຍາຍການຈັດຕັ້ງປະຕິບັດໄປສູ່ຂະແໜງການອື່ນໆ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ຜົນໄດ້ຮັບຈາກການປະຕິບັດໂຄງການ (I) ປັບປຸງຄຸນນພາບຂອງແຜນການງົບປະມານ, (ii) ປັບປຸງຄວາມສາມາດພາຍໃນກົມທີ່ກ່ຽວຂ້ອງຂອງກະຊວງການເງິນ ແລະຂະແໜງຄຸ້ມຄອງທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນງົບປະມານ. |
| **ຊື່ໂຄງການ** | **ການປັບປຸງຕາໜ່າງການຂົນສົ່ງໃນເຂດພາກເໜືອ ອານຸພາກພື້ນແມ່ນ້ຳຂອງ ໂຄງການທີ 2** (ການຊ່ວຍເຫຼືອວິຊາການການກະກຽມໂຄງການ**[PPTA] ສຳລັບ $1.0 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ເປົ້າໝາຍໂຄງການແມ່ນເພື່ອແນໃສ່ການປັບປຸງຂອງພາກສ່ວນຂອງຕາໜ່າງການຂົນສົ່ງພາກເໜືອຂອງ ສປປ ລາວ ເພື່ອຮັບປະກັນປະສິດທິພາບ ແລະ ປະຢັດຄ່າໃຊ້ຈ່າຍໃນການເດີນທາງຂອງຜູ້ເດີນທາງ ແລະການສົ່ງຈອນຂອງສິນຄ້າ (i) ລະຫວ່າງແຂວງຕໍ່ແຂວງ (ແຂວງຫົວພັນແລະແຂວງຊຽງຂວາງ), (ii) ລະຫວ່າງພາກຫາພາກ (ລະຫວ່າງພາກເໜືອຫາພາກກາງ), (iii) ພາຍໃນອະນຸພາກພື້ນແມ່ນ້ຳຂອງ (ໂດຍສະເພາະແມ່ນລະຫວ່າງແຂວງ ທັນຮົວ ຂອງປະເທດຫວຽດນາມ ແລະ ພາກເໜືອ ສປປ ລາວ). ການຊ່ວຍເຫຼືອວິຊາການການກະກຽມໂຄງການ PPTA ຈະຈັດຕັ້ງປະຕິບັດການສຳຫຼວດ/ການຄົ້ນຄວ້າຄວາມເປັນໄດ້ ແລະການລິເລີ່ມອອກແບບໂຄງການໃນການວາງໂຄງການເພື່ອທີ່ຈະປັບປຸງຄືນ ແລະ ຍົກລະດັບການເຊື່ອມຕໍ່ການຂົນສົ່ງ ແລະ ການອຳນວຍຄວາມສະດວກທີ່ແມ່ນທັງ (i) ຄວາມເປັນໄປໄດ້ດ້ານເສດຖະກິດແລະວິຊາການ, ແລະ (ii) ການຍອມຮັບຂອງສັງຄົມແລະຮັກສາສະພາບແວດລ້ອມ. ກອບຂອງກິດຈະກຳຂອງໂຄງການແມ່ນອີງໃສ່ກິດຈະກຳທີ່ກຳລັງດຳເນີນຢູ່ ແລະ ສາມາດສະໜັບສະໜູນເສັ້ນທາງເລກ 6 ໃນແຂວງຫົວພັນ ແລະຊຽງຂວາງ (ຈາກບ້ານລ້ອຍູ່ລຽບຊາຍແດນລາວ-ຫວຽດໄປທາງເໜືອທີ່ຈະໄປຫາແຂວງຊຳເໜືອ), ຈາກທາງໄຕ້ໄປທາງທິດຕາເວັນຕົກຈົນຮອດຈຸດຕັດຜ່ານຂອງເສັ້ນທາງເລກ 1C, ເຊິ່ງແມ່ນທະນາຄານ KfW ໃຫ້ການສະໜັບສະໜູນທາງດ້ານການເງິນໃນການປັບປຸງເສັ້ນທາງ. ການຊ່ວຍເຫຼືອວິຊາການການກະກຽມໂຄງການ ຈະສຶກສາສອງໄລຍະບຸລິມະສິດຂອງເສັ້ນທາງເລກ 6 ທີ່ມີຄວາມຍາວປະມານ 125 ກິໂລແມັດ. ສອງໄລຍະດັ່ງກ່າວຈະເຊື່ອມຕໍ່ ແຂວງຫຼວງພະບາງ ໃສ່ແຂວງທັນຮົວ ໃນປະເທດຫວຽດນາມ ຜ່ານເສັ້ນທາງເລກທີ 1C ແລະ 7 ໃນ ສປປ ລາວ ແລະ ເສັ້ນທາງ ເລກທີ 217 ໃນປະເທດຫວຽດນາມ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ກິດຈະກຳຈະມີ (i) ການວິເຄາະຂອງການເຊື່ອມຕໍ່ຂອງການຂົນສົ່ງທີ່ຈະກຳນົດທິດທາງຂອງຄວາມເປັນໄປໄດ້ຂອງເສດຖະກິດ ແລະວິຊາການ, ແລະການຍອມຮັບທາງສັງຄົມແລະສະພາບແວດລ້ອມ, ການຍົກລະດັບຂອງເສັ້ນທາງທີ່ມີແລ້ວ; (ii)ການກະກຽມແມ່ແບບໃນການຈັດວາງການຈັດລຳດັບຂອງອົງປະກອບແລະທາງເລືອກສຳລັບການເຊື່ອມຕໍ່ຂອງບັນດາອົງປະກອບເພື່ອຈັດຕັ້ງໂຄງການທີ່ສົມເຫດສົມຜົນສຳລັບການຈັດລະດັບໃນການສະໜອງທຶນ; (iii) ການທົບທວນຄືນການໃຫ້ຄວາມສະດວກທີ່ຊາຍແດນລາວຫວຽດພາຍໄຕ້ໂຄງການສ້າງທາງ; (iv) ການປັບປຸງການປະເມີນໃຫ້ທັນສະພາບການຂອງຂະແໜງການຍ່ອຍດ້ານເສັ້ນທາງໃນ ສປປ ລາວ ທີ່ໄດ້ປະຕິບັດສຳເລັດມາແລ້ວພາຍໄຕ້ການຊ່ວຍເຫຼືອວິຊາການ. ການພິຈາລະນາຄວາມຍືນຍົງຂອງໂຄງການຈະລວມມີການທົບທວນຂອງກິດຈະກຳຂອງໂຄງຮ່າງການລະດົມລາຍຮັບ ແລະ ການວິເຄາະລະອຽດຂອງການຂຶ້ນແຜນ ສຳລັບໂຄງຮ່າງການລະດົມລາຍຮັບ ແລະ ລາຍຈ່າຍທີ່ຕ້ອງການໃນການຮັກສາຕາໜ່າງເສັ້ນທາງແຫ່ງຊາດ. |
| **ຊື່ໂຄງການ** | **ການປະເມີນແຜນງານການພັດທະນາຂະແໜງກະສິກຳ** (ການຊ່ວຍເຫຼືອວວຊາການການກະກຽມໂຄງການ**[PPTA] (ສຳລັບ $0.700 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ໂຄງການຈະຖືກຈັດຕັ້ງປະຕິບັດອີງໃສ່ຜົນຂອງການຊ່ວຍເຫຼືອລ້າ 4843: ການການປະເມີນຄວາມຕ້ອງການ ຂອງ ຂະແໜງກະສິກຳ ແລະຊັບພະຍາກອນທຳມະຊາດພ້ອມກັບເປົ້າໝາຍ ຂອງການພັດທະນາການລົງທຶນແລະແຜນງານສະໜັບສະໜູນນະໂຍບາຍທີ່ຈະສົ່ງເສີມການຂ້າມຜ່ານຂອງຂະແໜງກະສິກຳ ແລະ ຊັບພະຍາກອນທຳມະຊາດຢ່າງຕໍ່ເນື່ອງເພື່ອກ້າວໄປເຖິງການຂຸ້ນຂ້ຽວຫຼາຍຂຶ້ນ, ການຜະລິດເພື່ອເປັນສິນຄ້າແລະອຸດສະຫະກຳການກະເສດ. ການຊ່ວຍເຫຼືອວິຊາການການກະກຽມໂຄງ ການຈະໃຫ້ຄຳຊີ້ແນະໃນການສ້າງມູນຄ່າເພີ່ມພາຍໃນຂະແໜງກະສິກຳແລະຊັບພະຍາກອນທຳມະຊາດໃຫ້ແກ່ຂັ້ນຕອນການຜະລິດ, ຜູ້ຜະລິດ, ຜູ້ດຳເນີນກິດຈະການ ຂະໜາດນ້ອຍເຊິ່ງຊ່ວຍໃຫ້ຂະແໜງການດັ່ງກ່າວປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກຫຼາຍຂຶ້ນ. ການຊ່ວຍເຫຼືອວິຊາການການກະກຽມໂຄງຈະທົບທວນ (i) ທຸກອົງປະກອບຂອງການຄຸ້ມຄອງແຫ່ງຊາດເຊິ່ງມີຜົນກະທົບຕໍ່ຜົນໄດ້ຮັບຂອງຂະແໜງກະສິກຳແລະຊັບພະຍາກອນທຳມະຊາດ; (ii) ຍຸດທະສາດຂະແໜງການແລະການສ້າງນະໂຍບາຍລວມທັງຍຸດທະສາດພາກພື້ນພາຍໃນກອບຂອງຂະແໜງການໂດຍລວມ, ລວມທັງເປົ້າໝາຍການຜະລິດ, ການຮັບປະກັນສະບຽງອາຫານ, ອື່ນໆ; (iii) ການວາງໂຄງຮ່າງຂະແໜງກະສິກຳແລະຊັບພະຍາກອນທຳມະຊາດ; ແລະ (v) ເນັ້ນໜັກແນວທາງການລົງທຶນໂຄງການທີ່ອາດເປັນໄປໄດ້ ໂດຍສະເພາະແມ່ນຂະແໜງການທັນສະໃໝ |

| | |
|---|---|
| | (ການລ້ຽງສັດ). |
| ຜົນທີ່ຄາດວ່າຈະໄດ້ຮັບ | ການສະໜອງເງິນກູ້ໃຫ້ແຜນງານການພັດທະນາຂະແໜງການໄດ້ຖືກຈັດສັນໃນການສະໜັບສະໜູນໄລຍະຂ້າມຜ່ານຂອງຂະແໜງກະສິກຳ ແລະ ຊັບພະຍາກອນມຳມະຊາດ. ບັນດາອົງປະກອບກວມເອົາ ການປັບປຸງການບໍລິຫານການປົກຄອງ (ຂະແໜງການກະສິກຳ ແລະທຳມະຊາດ ແລະເສດຖະກິດ ແລະສະພາບແວດລ້ອມນິຕິກຳ 14), ຍຸດທະສາດຂະແໜງການ ແລະການວິເຄາະນະໂຍບາຍ (ລວມໄປເຖິງການຮັບປະກັນສະບຽງອາຫານ), ການຍົກລະດັບ ແລະໃຫ້ມີຫຼັກການທີ່ມີເຫດຜົນ ຂອງການຄ້າ ແລະອາລະການລົງທຶນ, ການສະໜັບສະໜູນອົງການຈັດຕັ້ງ ແລະການສ້າງຄວາມສາມາດ (ລວມໄປເຖິງການສ້າງຄວາມຮູ້ດ້ານກະສິກຳ), ແລະຄວາມເປັນໄປໄດ້ຂອງການລົງທຶນໃນບັນດາຂະແໜງຍ່ອຍ( ຕົວຢ່າງ: ການລ້ຽງສັດ, ສະພາບແວດລ້ອມ ແລະຊີວະນາພັນ, ອື່ນໆ) |
| **ຊື່ໂຄງການ** | **ສ້າງຄວາມພ້ອມໃຫ້ແຜນງານຂະແໜງການ ໃນຂະແໜງການຂົນສົ່ງ** (ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ ADTA **ສຳລັບ $0.700 ລ້ານ)** |
| ເປົ້າໝາຍ, ອົງປະກອບ, ແລະ ຜົນໄດ້ຮັບ | ຈຸດປະສົງຂອງການຊ່ວຍເຫຼືອວິຊາການແມ່ນເພື່ອປັບປຸງຄວາມສາມາດຂອງກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະກໍ່ສ້າງ ເພື່ອພັດທະນານໂຍບາຍໃໝ່ ແລະປະຕິບັດການປະຕິຮູບອົງກອນ ແລະນະໂຍບາຍໃນຂະແໜງຂົນສົ່ງ,ພ້ອມໆກັນກັບປັບປຸງຄວາມສາມາດໃນການຈັດຕັ້ງປະຕິບັດໂຄງການ. ໂຄງການຊ່ວຍເຫຼືອລ້າຈະໄດ້ຈັດຕັ້ງຂຶ້ນຕາມໜ້າວຽກທີ່ໄດ້ເຮັດມາແລ້ວໃນໂຄງການຊ່ວຍເຫຼືອລ້າທີ່ຜ່ານມາ ແລະປະສານງານກັບກິດຈະກຳການພັດທະນາອົງກອນໃນຂະແໜງຂົນສົ່ງ. ໃນຂົງເຂດຂອງການປະຕິຮູບອົງກອນ ແລະນະໂຍບາຍທີ່ຈະໄດ້ຮັບການພິຈາລະນາ ລວມມີ ຄວາມເປັນເອກະພາບຂອງຂະແໜງການ ແລະທົນທາງທີ່ປອດໄພ. |
| ຜົນທີ່ຄາດວ່າຈະໄດ້ຮັບ | ຜົນຂອງການຊ່ວຍເຫຼືອລ້າຈະລວມມີ (i) ການດຳເນີນງານທີ່ມີປະສິດທິພາບໂດຍການຈັດຕັ້ງປະຕິບັດການປັບປຸງນະໂຍບາຍ ແລະການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນຂອງຂະແໜງຂົນສົ່ງ, ແລະ (ii) ການຈັດຕັ້ງປະຕິບັດໂຄງການຂອງກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະກໍ່ສ້າງ ໃຫ້ມີປະສິດທິພາບ |

ADTA = ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ; GMS = ອານຸພາກພື້ນແມ່ນ້ຳຂອງ; PPTA =ການຊ່ວຍເຫຼືອວິຊາການການກະກຽມໂຄງການ; TA = ການຊ່ວຍເຫຼືອດ້ານວິຊາການ.

**ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ**

## ຕາຕະລາງ 4: ແຜນການປະເພດການຊ່ວຍເຫຼືອຂອງການຊ່ວຍເຫຼືອທີ່ເປັນເງິນກູ້/ການຊ່ວຍເຫຼືອລ້າ, 2007

| ຂະແໜງ<br>ໂຄງການ/ແຜນງານ<br>ຊື່ໂຄງການ | ຈັດປະເພດ<br>ການວາງເປົ້າ<br>ໝາຍ | ບູລິມະສິດ<br>ຕາມຫົວຂໍ້<br>ພັດທະນາ | ພະແນກ | ປີທີ່ມີການ<br>ຊ່ວຍເຫຼືອ<br>ກະກຽມ<br>ໂຄງການ | ລວມ | ມູນຄ່າ (ລ້ານ$)<br>ADB<br>OCR | ADF | Total | ລັດຖະ<br>ບານ | ມີການ<br>ຮ່ວມທຶນ |
|---|---|---|---|---|---|---|---|---|---|---|
| 2007 ທຶນກູ້ຢືມທີ່ແນ່ນອນ | | | | | | | | | | |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | | | | |
| 1.ແຜນງານການພັດທະນາວິສະກະກິດຂະໜາດນ້ອຍ | TI | PSD/ISD | SEGF | 2006 | 14.3 | 0.0 | 10.0 | 10.0 | 1.3 | 3.0[a] |
| **ສາທາ** | | | | | | | | | | |
| 2.ໂຄງການການພັດທະນາລະບົບສາທາລະນະສຸກ | TI | ISD/GAD | SEAE | 2006 | 14.3 | 0.0 | 13.0 | 13.0 | 1.3 | 0.0 |
| **ລວມຍ່ອຍ** | | | | | **28.6** | 0.0 | **23.0** | **23.0** | **2.6** | **3.0** |
| **ພາກພື້ນ** | | | | | | | | | | |
| **ຄົມມະນາຄົມ ແລະ ຂົນສົ່ງ** | | | | | | | | | | |
| 1.ການປັບປຸງຕາໜ່າງການຂົນສົ່ງພາກເໜືອອະນຸພາກພື້ນແມ່ນ້ຳຂອງ | TI | ECO/RCI | SEID | 2005 | 89.5 | 0.0 | 27.0 | 27.0 | 15.5 | 47.0[b] |
| **ລວມຍ່ອຍ** | | | | | **89.5** | 0.0 | **27.0** | **27.0** | **15.5** | **47.0** |
| **ລວມ** | | | | | **118.1** | **0.0** | **50.0** | **50.0** | **18.1** | **50.0** |

**ADB** = ທະນາຄານພັດທະນາອາຊີ; **ADF** = ກອງທຶນພັດທະນາອາຊີ; **ECO** = ການເຕີບໂຕທາງດ້ານເສດຖະກິດແບບຍືນຍົງ; **GAD** =ບົດບາດຍິງຊາຍ ແລະ ການພັດທະນາ; **Gov't** = ລັດຖະບານ; **ISD** =**ການ**ພັດທະນາຄວາມສາມາດຂອງອົງກອນ; **OCR** = ທຶນກູ້ຢືມປົກກະຕິ; **PSD** =ການພັດທະນາຂະແໜງເອກະຊົນ; **RCI** = ການເຊື່ອມໂຍງ ແລະການຮ່ວມມືພາກພື້ນ; **SEAE** =ພະແນກກະສິກຳ ສິ່ງແວດລ້ອມ ແລະຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ; **SEGF** = ພະແນກການປົກຄອງບໍລິການ, ການເງິນແລະການຄ້າກົມອາຊີອາຄະເນ; **SEID** = ພະແນກໂຄງ ລ່າງຂອງກົມອາຊີອາຄະເນ; **SESS** = ພະແນກສັງຄົມຂອງກົມອາຊີອາຄະເນ; **SME** = ວິສາຫະກິດຂະໜາດກາງ ແລະຂະໜາດນ້ອຍ; **TI** =ກິດຈະກຳທີ່ເລັງໃສ່ເປົ້າໝາຍ.

[a] ການຮ່ວມທຶນກັບອົງການຈັດຕັ້ງເອີຣົບ

[b] ການຮ່ວມທຶນກັບກອງທຶນ OPEC ຈຳນວນ $10 ລ້ານ, $14 ລ້ານ(ການຊ່ວຍເຫຼືອລ້າ) ຈາກການຊ່ວຍເຫຼືອຂອງັລດຖະບານອົດສຕຣາລີ, ແລະ $23 ລ້ານຈາກປະເທດເກົາຫຼີ

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ຕາຕະລາງ 5: ແຜນການປະເພດການຊ່ວຍເຫຼືອທີ່ບໍ່ແມ່ນເງິນກູ້ ແລະການບໍລິການ, [a]2007

| ຂະແໜງ<br>ຊື່ຂອງການຊ່ວຍເຫຼືອ | ພະແນກ<br>ຮັບຜິດຊອບ | ປະເພດການ<br>ຊ່ວຍເຫຼືອ | ແຫຼ່ງທຶນ: ADB<br>ແຫຼ່ງທຶນ | ADB<br>ຈຳນວນ ($'000) | ອື່ນໆ<br>ແຫຼ່ງທຶນ | ອື່ນໆ<br>ຈຳນວນ ($'000) | ລວມ<br>($'000) |
|---|---|---|---|---|---|---|---|
| 2007 | | | | | | | |
| **ກົດໝາຍ, ການຄຸ້ມຄອງເສດຖະກິດ ແລະນະໂຍບາຍລັດ** | | | | | | | |
| 1. ການປັບປຸງການຄຸ້ມຄອງການເງິນພາກລັດ(ISD) | SEGF | ADTA | TASF | 850.0 | | 0.0 | 850.0 |
| **ກະສິກຳ ແລະຊັບພະຍາກອນທຳມະຊາດ** | | | | | | | |
| 2. ເສີມຂະຫຍາຍຄວາມສາມາດ ແລະນະໂຍບາຍສະໜັບສະໜູນແກ່ການຄຸ້ມຄອງກະສິກຳ ແລະແຫຼ່ງນ້ຳ | SEAE | ADTA | TASF | 850.0 | | 0.0 | 850.0 |
| 3. ການຄຸ້ມຄອງ ແລະຮັບມືກັບຄວາມສ່ຽງຂອງໄພແຫ້ງແລ້ງ ແລະອຸທົກກະໄພ ພາກພື້ນອານຸແມ່ນ້ຳຂອງ | SEAE | PPTA | JSF | 2,000.0 | | 0.0 | 2,000.0 |
| **ພະລັງງານ** | | | | | | | |
| 4. ກະກຽມການປະເມີນຜົນຂອງຜົນກະທົບສະສົມຂອງໂຄງການໄຟຟ້າພະລັງນ້ຳ ນ້ຳງື່ມ 3 | SEID/PSIF2 | ADTA | JSF | 980.0 | | 0.0 | 980.0 |
| **ອຸດສະຫະກຳ ແລະ ການຄ້າ** | | | | | | | |
| 5. ການພັດທະນາຄວາມສາມາດຂອງວິສະຫະກິດຂະໜາດກາງ ແລະຂະໜາດນ້ອຍ | SEGF | ADTA | JSF | 550.0 | | 0.0 | 550.0 |
| ລວມ | | | | **5,230.0** | | **0.0** | **5,230.0** |

ADB = ທະນາຄານພັດທະນາອາຊີ; ADTA = ການຊ່ວຍເຫຼືອການໃຫ້ຄຳແນະນຳທາງວິຊາການ; Gov't = ລັດຖະບານ; GMS = ອະນຸພາກພື້ນແມ່ນ້ຳຂອງ; ISD = **ການພັດ**ທະນາຄວາມສາມາດຂອງ ອົງກອນ; JSF = ກອງທຶນພິເສດປະເທດຍີ່ປຸ່ນ; PSIF2 = ກົມປະຕິບັດງານຂະແໜງເອກະຊົນ, ພະແນກໂຄງສ້າງການເງິນ 2; PPTA = ການຊ່ວຍເຫຼືອວິຊາການການກະກຽມໂຄງການ; SEAE = ພະ ແນກກະສິກຳ ສິ່ງແວດລ້ອມ ແລະຊັບພະຍາກອນທຳມະຊາດຂອງກົມອາຊີອາຄະເນ; SEGF = ພະແນກການປົກຄອງບໍລິຫານ, ການເງິນແລະການຄ້າກົມອາຊີອາຄະເນ; SEID= ພະແນກໂຄງລ່າງ ຂອງກົມອາຊີອາຄະເນ; SME = ວິສາຫະກິດຂະໜາດກາງ ແລະຂະໜາດນ້ອຍ; TASF = ກອງທຶນພິເສດການຊ່ວຍເຫຼືອດ້ານວິຊາການ.

[a] ບໍ່ໄດ້ລວມເອົາກອບທຶນບໍລິການທີ່ລວມຢູ່ໃນກອງທຶນເພື່ອຫຼຸດຜ່ອນຄວາມທຸກຍາກ.

ແຫຼ່ງຂໍ້ມູນ: ທະນາຄານພັດທະນາອາຊີ

## ກ່ຽວກັບທະນາຄານພັດທະນາອາຊີ

ທະນາຄານພັດທະນາອາຊີມີຈຸດປະສົງເພື່ອປັບປຸງສະຫວັດດີການຂອງປະຊາກອນໃນຂົງເຂດອາຊີ ແລະ ປາຊີຟິກ, ໂດຍສະເພາະແມ່ນປະຊາກອນຈຳນວນ 1.9 ຕື້ຄົນທີ່ດຳລົງຊີວິດດ້ວຍເງິນໜ້ອຍກ່ວາ 2 ໂດລາ ສະຫະລັດຕໍ່ມື້. ເຖິງແມ່ນວ່າຈະປະສົບຜົນສຳເລັດໃນຫຼາຍໆດ້ານຢູ່ໃນພາກພື້ນນີ້, ແຕ່ມັນຍັງຄົງມີຄົນທຸກ ຍາກຈຳນວນສອງສ່ວນສາມຂອງປະຊາກອນທີ່ທຸກຍາກຂອງໂລກອາໄສຢູ່. ທະນາຄານພັດທະນາອາຊີ ແມ່ນສະຖາບັນການເງິນສາກົນພະຫຸພາຄີເພື່ອການພັດທະນາທີ່ມີປະເທດສະມາຊິກ 67 ປະເທດ, 48 ປະ ເທດມາຈາກພາກພື້ນ ແລະ 19 ປະເທດມາຈາກພາກສ່ວນອື່ນໆຂອງໂລກ. ວິໄສທັດຂອງທະນາຄານພັດ ທະນາອາຊີ ແມ່ນເຮັດໃຫ້ພາກພື້ນອາຊີ ແລະ ປາຊີຟິກປັດສະຈາກຄວາມທຸກຍາກ. ພາລະກິດຂອງທະ ນາຄານພັດທະນາອາຊີແມ່ນເພື່ອຊ່ວຍບັນດາປະເທດສະມາຊິກທີ່ກຳລັງພັດທະນາຂອງເຂົາໃຫ້ຫຼຸດຜ່ອນ ຄວາມທຸກຍາກແລະ ປັບປຸງຄຸນນະພາບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ.

ເຄື່ອງມືໃນການຊ່ວຍເຫຼືອຫຼັກຕໍ່ບັນດາປະເທດສະມາຊິກທີ່ກຳລັງພັດທະນາຂອງທະນາຄານພັດທະນາອາຊີແມ່ນການສົນທະນາດ້ານນະໂຍບາຍຕ່າງໆ, ການກູ້ຢືມ, ການລົງທຶນຫຼັກຊັບ, ການຄ້ຳປະກັນ, ທຶນຊ່ວຍເຫຼືອລ້າ ແລະ ການຊ່ວຍເຫຼືອທາງດ້າວິຊາການ. ຈຳນວນເງິນທີ່ໃຫ້ກູ້ຢືມແຕ່ລະປີໂດຍທົ່ວໄປ ມີປະມານ 6 ຕື້ໂດລາສະຫະລັດ, ພ້ອມກັບການຊ່ວຍເຫຼືອດ້ານວິຊາການທັງໝົດມີປະມານ180 ລ້ານໂດ ລາສະຫະລັດຕໍ່ປີ.

ຫ້ອງການໃຫ່ຍທະນາຄານພັດທະນາອາຊີແມ່ນຕັ້ງຢູ່ນະຄອນຫຼວງມະນີລາ, ມີຫ້ອງການຕາງໜ້າຈຳນວນ 26 ແຫ່ງໃນທົ່ວໂລກ ແລະ ມີພະນັກງານທັງໝົດ 2,000 ຄົນມາຈາກ 50 ກ່ວາປະເທດ.

ທະນາຄານພັດທະນາອາຊີ
ຖະໜົນ 6 ADB, ເມືອງແມນດາລູຍອງ
1550 ເທໂຫຼ, ຟີລິບປິນ
www.adb.org/Documents/CSPs
ລະຫັດເກັບສິ່ງພິມຈຳເບີ. PRF133708

ພິມທີ່ ຟີລິບປິນ